<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2017 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
7557 Rambler Road, Suite 1200 , Dallas, TX 75231-2388.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY PRESS® Leadership Team

Executive Director, Baptist General Convention of Texas: David Hardage
Director, Great Commission Team: Delvin Atchison
Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 7, 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7, 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 10, 11, 12, 13 and Easter
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10, 11, 12, 13 and Easter
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# ການຊົງສ້າງໂລກຂອງພຣະເຈົ້າ: ຮູບຮ່າງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ ບົດທີ 1:1-13

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ ບົດທີ 1:1-13

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຊົງສຳແດງຣິດອຳນາດຂອງພຣະອົງ ໃນການຊົງສ້າງຈັກວານນີ້

**ຄຳຖາມເພື່ອການຄົ້ນຄວ້າ**: ການຊົງສ້າງມີຄວາມສຳຄັນຢ່າງໃດກ່ຽວກັບຣິດອຳນາດຂອງພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອສຳແດງເຖິງຣິດອຳນາດຂອງພຣະເຈົ້າໃນການຊົງສ້າງຈັກວານນີ້ໂດຍພຣະຄຳຂອງພຣະອົງເອງ.

## ແຜນການສິດສອນສຳລັບຄຣູ

## ນຳເຣື່ອງເຈົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ນຳສິ່ງໃດສິ່ງນຶ່ງທີ່ທ່ານເຫັນວ່າເປັນຂອງທີ່ເກົ່າແກ່  ບໍ່ວ່າຈະເປັນຮ່າງເຮືອບິນ ຫລືວ່າຮູບພາບກໍໄດ້. ຖາມນັກຮຽນເບິ່ງວ່າການໃຊ້ເວລາເຮັດສິ່ງນີ້ຂຶ້ນມາໃຊ້ເວລາດົນປານໃດ. ແລ້ວການຊອກຫາວັດຖຸທີ່ຈະມາເຮັດນັ້ນແມ່ນໃຊ້ເວລານານບໍ່ ແລະກໍຍາກບໍ່ທີ່ຈະປະກອບໃສ່ກັນ. ຕ້ອງໃຊ້ເວລາຫລາຍແມ່ນບໍ່. ສິ່ງນັ້ນມີຄວາມໝາຍຫຍັງສຳລັບທ່ານ.
   ຕອບຄຳຖາມຕໍ່ໄປນີ້:
   - ການສ້າງສິ່ງນີ້ເໝືອນກັບພຣະເຈົ້າສ້າງສວັນແລະແຜ່ນດິນໂລກຢ່າງໃດ?
   - ການສ້າງສິ່ງນີ້ແຕກຕ່າງກັນກັບພຣະເຈົ້າສ້າງສວັນແລະແຜ່ນດິນໂລກຢ່າງໃດ?
   - ສິ່ງທີ່ພຣະເຈົ້າສ້າງຂຶ້ນມາມີຈຸດພິເສດຢ່າງໃດ? ເປັນຫຍັງ?

2. ໃຊ້ກະດານເພື່ອຈະບັນທຶກຄຳຕອບ ແລ້ວຈະໄດ້ເຫັນຄວາມແຕກຕ່າງ. ຖາມ: ແນວຄິດການສ້າງໂລກທີ່ຜິດໆ ແລະທີ່ພວກເຮົາໄດ້ຍິນມາເປັນຢ່າງໃດ? (ສົນທະນາ)

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ໃຫ້ນັກຮຽນຄົນນຶ່ງອ່ານ ປະຖົມມະການ 1:1-2. ຄຣູຈະເວົ້າຫຍໍ້ໆກ່ຽວກັບພຣະຄັມພີຕອນນີ້. ກ່າວເຖິງຄວາມມືດປົກຄຸມໂລກຢູ່. ພຣະວິນຍານບໍຣິສຸດຂອງພຣະເຈົ້າທຳງານຢູ່ໃນຄວາມມືດ. ເໝືອນກັບທຸກວັນນີ້ພຣະເຈົ້າຍັງກຳຈັດຄວາມມືດຢູ່.

4. ອີກຄົນນຶ່ງອ່ານປະຖົມມະການ 1:3-5. ເໝືອນເດີມ ຄຣູຕ້ອງອະທິບາຍຫຍໍ້ໆກ່ອນ ແລ້ວກັບມາຫາສິ່ງທີ່ຂຽນໄວ້ໃນກະດານ. ຖາມ: ພວກເຮົາຈະນຳແສງສະວ່າງຂອງພຣະເຈົ້າເຂົ້າມາຫາຄົນທີ່ກຳລັງເຂົ້າໃຈຜິດຢ່າງໃດ? ຕົວຢ່າງ: ຄົນທີ່ບໍ່ເຂົ້າໃຈໃນການຊົງສ້າງ ພວກເຂົາກໍຈະບໍ່ຮູ້ນັບຖືໃຜ, ຈະໃຫ້ກຽດໃຜ....

5. ໃຫ້ອີກຄົນນຶ່ງອ່ານປະຖົມມະການ 1:6-8. ຄຣູຕ້ອງອະທິບາຍອີກເຊັ່ນດຽວກັນ (ສົນທະນາ) ວ່າເຣື່ອງນ້ຳມີຄວາມສຳຄັນຢ່າງໃດໃນໂລກນີ້, ແລະມີຄວາມສຳຄັນຢ່າງໃດກ່ຽວກັບມະນຸດພວກເຮົາ? **ພຣະອົງສ້າງທຸກຢ່າງຈະມີເປົ້າໝາຍຢູ່ສເມີ.** ໃຫ້ຄຣູຢ້ຳຢູ່ເລື້ອຍໆໃນການຊົງສ້າງນີ້.

6. ໃຫ້ຄົນນຶ່ງອ່ານໃນພຣະຄັມພີປະຖົມມະການ 1:9-13. ກັບມາຫາສິ່ງທີ່ຂຽນໄວ້ໃນກະດານໃນຄຳວ່າເຂົ້າໃຈຜິດ. ຖ້າມາເບິ່ງຕອນນີ້ແຮ່ງໄປໄກ. ຄິດເບິ່ງວ່າພວກເຮົາຈະເຕີບໃຫຍ່ແລະຈະເກີດໝາກຜົນຢ່າງໃດ. ພວກເຮົາພະຍາຍາມຈະນຳເອົາແສງສະວ່າງເຂົ້າມາເພື່ອໃຫ້ພວກເຂົາໄດ້ເຫັນແສງນັ້ນ.

## <u>ນຳບົດຮຽນໄປໃຊ້ໃນຊີວິດປະຈຳວັນ</u>

7. ສລຸບບົດຮຽນໃນວັນນີ້ ພວກເຮົາໄດ້ຮູ້ຄຳວ່າ ວັນທີ່ພຣະເຈົ້າຊົງສ້າງແລ້ວໃນປະຖົມມະການບົດທີ 1 ເຖິງຢ່າງໃດກໍຕາມພຣະເຈົ້າຊົງສ້າງທຸກຢ່າງໂດຍມີເປົ້າໝາຍ. ພຣະອົງສ້າງດ້ວຍພຣະຄຳຂອງພຣະອົງ. ທີ່ພວກເຮົາມີຊີວິດທຸກວັນນີ້ກໍເພາະພຣະອົງຊົງມີເປົ້າໝາຍສຳລັບພວກເຮົາ.

8. ຝາກຄຳຖາມໃຫ້ພິຈາຣະນາ: ພຣະຈົ້າມີຈຸດພິເສດຢ່າງໃດຈຶ່ງແຍກຄວາມສະວ່າງອອກຈາກຄວາມມືດ?

9. ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ພບ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# ການຊົງສ້າງຂອງພຣະເຈົ້າ:ສ້າງຕື່ມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປະຖົມມະການ 1:14-25; 2:1-3

**ພູມຫລັງຂອງພຣະຄັມພີ:** ປະຖົມມະການ 1:14-25; 2:1-3

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຊົງເພີ້ມເຕີມໂລກນີ້ໃນການຊົງສ້າງໂດຍພຣະຄຳ ຫລັງຈາກນັ້ນພຣະອົງກໍຊົງພັກຜ່ອນ.

**ຄຳຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງຄືການສ້າງທີ່ໂດດເດັ່ນແລະເປົ້າປາຍສູງທີ່ສຸດຂອງພຣະເຈົ້າ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອໃຫ້ພິຈາຣະນາເຖິງຈຸດປະສົງຂອງພຣະເຈົ້າໃນການຊົງສ້າງດ້ວຍພຣະຄຳ ແລະການຊົງພັກຜ່ອນ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຖ້ານຳຮູບທີ່ມີຄວາມແຕກຕ່າງກັນໃນການຊົງສ້າງມາໂຊໃຫ້ນັກຮຽນເຫັນຈະເປັນການດີຫລາຍ. ໃຫ້ເອົາໄວ້ປະສົມກັນແບບບໍ່ເປັນລຳດັບ. ຄຣູຈະຢືນຢູ່ໜ້າຫ້ອງຮຽນແລ້ວຄ່ອຍຍົກຮູບຂຶ້ນມາວ່າຮູບນີ້ພຣະເຈົ້າສ້າງວັນໃດ? ຍົກຮູບຂຶ້ນແລ້ວໃຫ້ນັກຮຽນຕອບຕໍ່ໆໄປ.......ພາຍໃນສາມມື້ພຣະເຈົ້າໄດ້ສ້າງຫຍັງແດ່?

2. ໃຫ້ມີການສົນທະນາໃນທັມຊາດທີ່ພຣະເຈົ້າຊົງສ້າງຂຶ້ນໃນບົດທີ 1. ພຣະເຈົ້າຊົງເປັນພຣະຜູ້ສ້າງຈັກວານ ພຣະອົງກໍຍັງເປັນຜູ້ຊຽນພຣະຄັມພີອີກ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ່ານໃນປຶ້ມພຣະຄັມພີປະຖົມມະການ 1:14-19 ຄຣູຈະອະທິບາຍຫຍໍ້ໆພໍໃຫ້ນັກຮຽນເຂົ້າໃຈແດ່. ແລ້ວກໍມາເນັ້ນໜັກຢູ່ແສງສະວ່າງ ເພາະເປັນສິ່ງສຳຄັນຫລາຍທີ່ເຮັດໃຫ້ມີຊີວິດໄດ້. ສົນທະນາກັບນັກຮຽນກ່ຽວກັບແສງສະວ່າງຂອງພຣະວິນຍານບໍຣິສຸດ. ແລະກໍຍັງເປັນສິ່ງສຳຄັນສຳລັບຈິດວິນຍານຂອງພວກເຮົາເຊັ່ນດຽວກັນ.

4. ອ່ານປະຖົມມະການ 1:20-23.  ສົນທະນາກ່ຽວກັບການຊົງສ້າງທ້ອງຟ້າ ແລະນ້ຳທະເລ ແລ້ວພຣະອົງຍັງເພີ້ມເຕີມສັດສາວາສິ່ງອື່ນໆອີກ   ຈົ່ງເວົ້າວ່າພຣະເຈົ້າບໍ່ໄດ້ມີພຣະປະສົງຈະສ້າງສັດຕ່າງໆຂຶ້ນມາເພື່ອໃຫ້ພວກເຂົາຕາຍ,   ພຣະອົງຕ້ອງການໃຫ້ພວກເຂົາມີຊີວິດ.   ພຣະອົງຢາກໃຫ້ມີສັດຕ່າງໆເຕັມໂລກນີ້. ພຣະເຈົ້າຊົງສ້າງຕາມຊະນິດຂອງພວກເຂົາ. ທ່ານຮູ້ບໍ່ວ່າຊະນິດໃດຈະຊ່ວຍທ່ານ ແລະຊະນິດໃດຈະຢູ່ໃສ.

5. ໃຫ້ຄົນສມັກໃຈຄົນນຶ່ງອ່ານປະຖົມມະການ 1:24-25. ຈົ່ງຄິດເບິ່ງດູວ່າພຣະອົງໃຊ້ເວລາຫລາຍປານໃດທີ່ຈະສ້າງສິ່ງເຫລົ່ານີ້. (ສົນທະນາ)

   ທ່ານລອງສະແດງຕົວເອງເບິ່ງດູວ່າ ຈະໃຊ້ທຸກຢ່າງໃຫ້ມີຄຸນຄ່າຕາມທີ່ພຣະເຈົ້າຊົງມອບໃຫ້ພວກເຮົາຫລືບໍ່.

   - ເວລາ: ເລີ້ມຕົ້ນແລະລົງທ້າຍຕົງເວລາບໍ່
   - ສລາດ: ໄດ້ທຳງານໃຫ້ຈົບສຳເຣັດບໍ່
   - ຕັ້ງໃຈ: ທຳງານຢ່າງມີເປົ້າໝາຍບໍ
   - ສິ່ງທີ່ໄດ້ມາ: ຈະໃຊ້ທຸກຢ່າງທີ່ໄດ້ມາ ບໍ່ຍອມຖິ້ມ
   - ຄວາມຄິດ: ຄິດວ່າຕ້ອງທຳດີຕລອດໄປ ເພື່ອຕົນເອງແລະຄົນອື່ນ.
   - ສັ່ງຊາຕີລາຄາ: ແຕ່ລະວັນຕ້ອງສລັບຜົນ ຕີລາຄາ ຄຸນນະພາບ
   - ຍິນດີ: ສະແດງຄວາມຍິນດີ

6. ປະຖົມມະການ  2:1-3  ສົນທະນາກ່ຽວກັບວັນຊະບາໂຕ. ເວົ້າເຖິງເຣື່ອງຄວາມສຳຄັນຂອງວັນຊະບາໂຕ. ລອງກ່າວຄຳພະຍານສັ້ນໆເບິ່ງ ກ່ຽວກັບເຣື່ອງວັນຊະບາໂຕຂອງຄອບຄົວທ່ານເອງ. ໃນອາທິດນີ້ທ່ານຈະຮັກສາວັນຊະບາໂຕໄດ້ບໍ່.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ຄຣູຈະບັນລະຍາຍເຖິງການສລຸບ ແລະໜູນໃຈໃຫ້ນັກຮຽນໃຊ້ວັນຊະບາໂຕຂອງຕົນເອງ. ວັນຊະບາໂຕນີ້ຈະຝຶກຝົນໃຫ້ພວກເຮົາຫຍັບເຂົ້າໃກ້ພຣະເຈົ້າ  ແລະມີຄວາມສັມພັນກັບພຣະອົງຍິ່ງໆ ຂຶ້ນໄປ. ຫລືທ່ານຄິດວ່າຢ່າງໃດ?

8. ຕຽມຕົວເຂົ້ານະມັສການ, ກ່ອນອື່ນຂໍເຊີນຮ່ວມກັນອ້ອນວອນອະທິຖານ ເພື່ອທຸກຄົນຈະໄດ້ຕຽມພ້ອມ.

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 3

# ການຊົງສ້າງຂອງພຣະເຈົ້າ: ດ້ວຍສີມື

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 2:4-17

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 2:4-17

**ຈຸດສຳຄັນສຳລັບບົດຮຽນນີ້:** ການອອກແບບສວນເອເດນທີ່ສົດສວຍງົດງາມເພື່ອຈະຕຽມຈັດໃຫ້ສິ່ງທີ່ຖືກສ້າງໄດ້ໃຊ້ຊີວິດຢູ່ຢ່າງສະບາຍ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງຄືຄວາມຮັບຜິດຊອບຂອງພວກເຮົາຕໍ່ສິ່ງທີ່ພຣະເຈົ້າຊົງສ້າງແລະຕໍ່ຄຳແນະນຳຂອງພຣະອົງ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະອະທິບາຍໃຫ້ສິ່ງທີ່ພຣະອົງຊົງສ້າງຮັບຮູ້ວ່າພຣະອົງຊົງສ້າງແລະຮັບເອົາຄຳແນະນຳ ທີ່ພຣະອົງຊົງມອບໃວ້.

## ແຜນການສິດສອນສຳລັບຄຣູ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 15 ນາທີ)

1. ຖືໜັງສືພິມທີ່ມີຫົວຂໍ້ທີ່ລຽນຊື່ກັນອອກມາ. ແລະເອົາສະບັບທີ່ພິມອອກມາຈາກອິນເຕີແນັດ. ແລ້ວໃຫ້ອ່ານເລື່ອງນຶ່ງທີ່ຈັດຫົວຂໍ້ບໍ່ດີປານໃດ. ຖາມນັກຮຽນ: ຖ້າອ່ານແຕ່ຫົວຂໍ້ ຈະເຂົ້າໃຈເລື່ອງທັງໝົດບໍ່. ແຕ່ວ່າຍັງມີບາງຫົວຂໍ້ ທີ່ບາງຄົນອ່ານແລ້ວກໍເຂົ້າໃຈໄດ້. ລອງເບິ່ງໃນແຕ່ລະຫົວຂໍ້ ວ່າພວກເຮົາພໍຈະເຂົ້າໃຈໄດ້ບໍ່. ອະທິບາຍເຖິງການຂະຍາຍ, ຫົວຂໍ້ໃຫຍ່ກໍບໍ່ສາມາດໃຫ້ລາຍລະອຽດໄດ້ດີກໍມີ. ເຖິງຈະເປັນຢ່າງໃດກໍຕາມ, ຫົວຂໍ້ໃດກໍດີຫາກມັນບໍ່ຂັດແຍ້ງກັນ.

2 ສົມທຽບສອງແນວຄິດ: ສ້າງສິ່ງທີ່ໃຫຍ່ ໃຫ້ເຫັນຊັດ ຢ່າງຈະແຈ້ງ ກວ້າງຂວາງ. ອີກແນວຄິດນຶ່ງຄືສ້າງທຸກຢ່າງ ຕ້ອງໃຫ້ທຸກຢ່າງມີຄືກັນ ຢ່າງລະອຽດລະອໍ. ການຊົງສ້າງສິ່ງໃຫຍ່ແລະສິ່ງນ້ອຍ ແມ່ນບໍ່ມີການຂັດແຍ້ງຫຍັງກັນ ພວກເຮົາຈະພົບໃນປະຖົມມະການບົດທີ 1ແລະ2 ວ່າການຊົງສ້າງແມ່ນສຳເລັດເປົ້າໝາຍແລະມີຄວາມສຳຄັນຢ່າງໃດ. ຄ້າຍກັບຫົວຂໍ້ ໜັງສືພິມທີ່ຈັດຕຽມລາຍລະອຽດໃວ້ຢ່າງຄົບຖ້ວນວ່າຈະມີຫຍັງເກີດຂຶ້ນໃນວັນທີຫົກ ເວລາພຣະອົງຈະສ້າງມະນຸດ.

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

**3** ອ່ານປະຖົມມະການ 2:4-7. ມາເນັ້ນໜັກຢູ່ທີ່ຂໍ້ 4 ກ່ອນ. ທວນຄືນຈັກໜ່ອຍເລື່ອງການສ້າງໂລກ ແລະສວັນ. ຫລັງຈາກນັ້ນກໍໃຫ້ອະທິບາຍເຖິງການຊົງສ້າງມະນຸດດ້ວຍຝຸ່ນຂີ້ດິນຈາກດິນໂລກ. ແລ້ວກໍໃຫ້ຄຣູອະທິບາຍ ເຖິງການເປົ່າລົມໃສ່ມະນຸດນັ້ນ. ໃຫ້ອະທິບາຍຕໍ່ໄປວ່າ: **ພຣະເຈົ້າສ້າງພວກເຮົາເພື່ອໃຫ້ມີຄວາມສັມພັນກັບພຣະອົງ.** ອະທິບາຍເຖິງສ່ວນບຸກຄົນ ແລະ ຈິດວິນຍານຂອງແຕ່ລະຄົນ.

4 ໃຫ້ຄົນນຶ່ງອ່ານປະຖົມມະການບົດ 2:8-14 ໃຫ້ຄຣູອະທິບາຍເຖິງແມ່ນ້ຳ 4 ສາຍວ່າມີຄວາມສຳຄັນຫຍັງໃຫ້ແກ່ສວນເອເດນ. ເປັນຫຍັງ ພຣະເຈົ້າຈຶ່ງໃສ່ຊື່ຊາຍຄົນນັ້ນວ່າອາດາມ?

5 ອ່ານປະຖົມມະການ 2:15-17 ບອກນັກຮຽນຟັງໃຫ້ດີ ຄຣູຈະອະທິບາຍເວົ້າຄືນບົດທີ 1 ແຕ່ເມື່ອມາເຖິງການສ້າງມະນຸດ ກໍມີຄວາມແຕກຕ່າງໃນການຊົງສ້າງ. ມາເບິ່ງງານທີ່ພຣະເຈົ້າມອບໃຫ້ອາດາມ, ໝາຍຄວາມວ່າຕ້ອງມີການຮັກສາ, ມີການກິນ ແລະມີການຈະເລີນເຕີບໂຕ. ຕົ້ນໄມ້ຢູ່ໃນສວນນີ້ເຈົ້າກິນໄດ້.....ຄຣູຈະສົມທຽບໃສ່ກັບຈິດວິນຍານກໍໄດ້

## <u>ນຳບົດຮຽນໄປໃຊ້ໃນຊີວິດປະຈຳວັນ</u>

6 ສົນທະນາກັບນັກຮຽນອີກ ກ່ຽວກັບຫົວຂໍ້ທີ່ວ່າ ເຮົາຄວນຈະຮັກສາໂລກນີ້ໃຫ້ສະອາດໄດ້ຢ່າງໃດ? ແລ້ວກໍຈະຖາມວ່າ: ເຮົາຄວນຈະຮັກສາໝາກຜົນແຫ່ງພຣະວິນຍານຂອງພວກເຮົາຢ່າງໃດ?

7 ຂອບພຣະຄຸນພຣະເຈົ້າທີ່ພຣະອົງໄດ້ຊົງສ້າງໂລກນີ້ເພື່ອພວກເຮົາ. ພວກເຮົາຄວນຈະນຳເອົາງານຈາກສິພຣະຫັດຂອງພຣະອົງເຜີຍແຜ່ອອກໄປໃຫ້ທຸກຄົນໄດ້ຮູ້ ເພື່ອພວກເຂົາຈະຂອບພຣະຄຸນແລະສັຣເສີນພຣະອົງ.

8 ອ້ອນວອນອະທິຖານ ຕຽມຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ພຣະເຈົ້າຊົງສ້າງມະນຸສໂລກ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 1:26-28; 2:18-25

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 1:26-28; 2:18-25

**ຈຸດສຳຄັນສຳລັບບົດຮຽນນີ້:** ພຣະເຈົ້າຊົງສ້າງມະນຸດຊາດຕາມພຣະລັກສະນະພາບຂອງພຣະອົງ ເພື່ອໃຫ້ມີຄວາມສັມພັນກັບພຣະອົງ ແລະຕໍ່ກັນແລະກັນ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງ ຫລືມີຄວາມໝາຍຢ່າງໃດຄຳວ່າ "ສ້າງຕາມພຣະລັກສະນະຂອງພຣະອົງ?"

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະເຂົ້າໃຈເຖິງຈຸດປະສົງຂອງພຣະເຈົ້າທີ່ພຣະອົງຊົງສ້າງຂ້າພະເຈົ້າມາຕາມພຣະລັກສະນະພາບຂອງພຣະອົງ.

## ເຂົ້າໃຈພຣະຄັມພີ

ໃນບົດ 1:1-2:3 ພຣະເຈົ້າໄດ້ສ້າງໂລກຢ່າງສວຍງາມດ້ວຍພຣະກຳລັງຂອງພຣະອົງໃນຫົກວັນ ແລະວັນຕໍ່ໄປພຣະອົງພັກຜ່ອນ. ປະຖົມມະການ 1:26-28 ພຣະເຈົ້າໄດ້ສ້າງສິ່ງປະເສີດສຸດເພາະມະນຸດມີລັກສະນະເໝືອນພຣະອົງເອງ. ພຣະອົງໄດ້ໃຫ້ພວກເຂົາມີອຳນາດເໜືອນົກ ສັດປ່າແລະສັດເລືອຄານທຸກຊະນິດ ໃນທີ່ສຸດພຣະອົງປະກາດວ່າສິ່ງທີ່ພຣະອົງໄດ້ສ້າງມາເປັນສິ່ງດີໝົດ.

ປະຖົມມະການ 2:18-25 ໄດ້ເວົ້າເຖິງຮູບພາບໃຫຍ່ຂອງສວນເອເດນ ຍັງໄດ້ພັນລະນາຢ່າງລະອຽດໃນບົດ 2:4-4:26. ໃນບົດ 2:4-7 ໄດ້ບອກວ່າພຣະເຈົ້າໄດ້ເອົາດິນມາປັ້ນເປັນມະນຸດ ໃນບົດ 2:8-14 ໄດ້ກ່າວເຖິງຄວາມງົດງາມຂອງສວນເອເດນ ຊຶ່ງເປັນບ່ອນທີ່ພຣະອົງໃຫ້ມະນຸດຄູ່ທຳອິດໄດ້ຢູ່. ພຣະເຈົ້າໄດ້ໃຫ້ງານທຳແກ່ອາດາມ ແລະປະທານອາຫານຈາກສວນນັ້ນໃຫ້ມະນຸດ ແຕ່ພຣະອົງສັ່ງຫ້າມບໍ່ໃຫ້ກິນໝາກໄມ້ຈາກຕົ້ນທີ່ຮູ້ຈັກຄວາມດີແລະຄວາມຊົ່ວ (2:15-17).

### ແນະນຳການສອນ

#### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ນຳເອົາເຊືອກມາໃນຫ້ອງຮຽນ ເລືອກເອົາຄູ່ຜົວເມັຽ ຫລືໝູ່ຄູ່ໃກ້ຊິດກັນໃຫ້ເປັນຄູ່ກັນປະມານ 4-5 ຄູ່ສຸດແລ້ວແຕ່ມີສະມາຊິກໃນຫ້ອງຮຽນ. ບອກແຕ່ລະຄູ່ມັດເຊືອກໃສ່ຄົນລະຂາຕິດກັນເພື່ອຈະຍ່າງໄປມາໄດ້ເປັນຄູ່ກັນ. ບອກໃຫ້ແຕ່ລະຄູ່ຍ່າງພ້ອມກັນ ແລະຕັ້ງຄຳຖາມດັ່ງຕໍ່ລົງໄປນີ້:
    - ທ່ານພົບບັນຫາຫຍັງບໍ່ທີ່ຍ່າງແນວນີ້?

- ທ່ານໄດ້ມີທາງບໍ່ເພື່ອຈະເຮັດໃຫ້ທ່ານຍ່າງໄປມາດີຂຶ້ນ?
- ໃນທາງໃດການແຕ່ງງານເປັນເໝືອນກັບສາມຂານີ້?

2. ໃນບົດຮຽນວັນນີ້ຈະໄດ້ສຶກສາເຖິງການແຕ່ງງານເທື່ອທຳອິດຂອງມະນຸດ ພວກເຂົາໄດ້ຢູ່ຮ່ວມກັນຢ່າງຜົວເມັຽເປັນອັນນຶ່ງອັນດຽວ ແຕ່ເປັນບຸກຄົນນັ້ນແຕກຕ່າງກັນ ເໝືອນກັບທັງສອງຄົນໄດ້ຍ່າງສາມຂາ. ມັນອາດເປັນການຍາກທີ່ຈະຍ່າງສາມຂາ ແຕ່ພຣະເຈົ້າຕ້ອງການໃຫ້ພວກເຂົາເຮັດວຽກຮ່ວມກັນ ເຖິງຈະແຕກຕ່າງ ເພາະການເປັນອັນນຶ່ງອັນດຽວຈະມີພລັງຫລາຍ ດີກວ່າການເຮັດຜູ້ດຽວ.
3. ເອີ້ນໃຫ້ມີຜູ້ສມັກອ່ານ ປົດ 1:26-28 ອອກສຽງດັງ.
   - ພຣະເຈົ້າໄດ້ສ້າງຜູ້ຊາຍແລະຜູ້ຍິງຕາມພຣະລັກສະນະຂອງພຣະອົງ. ທ່ານໄດ້ເຫັນພາບນັ້ນໃນຊີວິດຂອງຄົນອື່ນບໍ່?

4. ອ່ານປົດ 2:18-20 ອອກສຽງດັງ. ໃຫ້ເຫລົ່າເຖິງອາດາມໄດ້ໃສ່ຊື່ຂອງສັດຕ່າງໆດ້ວຍຄວາມລຳບາກອັນໃຫຍ່. ຖາມວ່າເປັນດ້ວຍເຫດໃດອາດາມຈຶ່ງຢາກໄດ້ຜູ້ຊ່ອຍ? ອະທິບາຍວ່າໃນຊີວິດຂອງພວກເຮົາ ພຣະເຈົ້າກໍໄດ້ປະທານຜູ້ຊ່ອຍໃຫ້ຄືກັນ (ຕົວຢ່າງ: ຜົວເມັຽ, ເພື່ອນ, ຄົນໃນຄຣິສຕະຈັກ). ໃຫ້ສະມາຊິກສົນທະນາກັນຈາກຄຳຖາມນີ້: ອາດາມຕ້ອງການຜູ້ຊ່ອຍຫລາຍ ດັ່ງນັ້ນ, ພຣະເຈົ້າຈຶ່ງໄດ້ສ້າງເອວາຂຶ້ນມາກໍດ້ວຍເຫດຜົນນີ້. ໃຜເປັນຜູ້ຊ່ອຍທ່ານໃນຊີວິດນີ້? ທ່ານເຄີຍບອກຜູ້ຊ່ອຍຂອງທ່ານບໍ່ວ່າທ່ານຂອບໃຈ ແລະຮູ້ຈັກຄຸນຄ່າທີ່ພຣະເຈົ້າໄດ້ປະທານໃຫ້ທ່ານ?
5. ຂໍໃຫ້ມີຜູ້ສມັກອ່ານ ປົດ 2:21-25. ອະທິບາຍວ່າການທີ່ພຣະເຈົ້າໄດ້ສ້າງເອວາຈາກຂ້າງຂອງອາດາມເປັນເຣື່ອງເລິກລັບຫລາຍ. ບອກໃຫ້ສະມາຊິກຮູ້ອີກວ່າເວລາອາດາມໄດ້ຕື່ນຈາກນອນຫລັບຫລັງຈາກພຣະເຈົ້າໄດ້ເອົາພາກສ່ວນນຶ່ງຈາກຂ້າງຂອງລາວສ້າງເປັນເອວາ. ເມື່ອອາດາມຮູ້ເມື່ອຄືງ ແລະເຫັນເອວາ ອາດາມກ່າວວ່າແນວໃດ? ບອກໃຫ້ສະມາຊິສົນທະນາກັນຕາມຄຳຖາມຕໍ່ລົງໄປນີ້:
   - ພຣະເຈົ້າໄດ້ສ້າງຜູ້ຊ່ອຍໃຫ້ອາດາມ. ໃຜເປັນຜູ້ຊ່ອຍທ່ານ?
   - ມີຄວາມສຳຄັນອັນໃດທີ່ເອວາອອກມາຈາກຂ້າງຂອງອາດາມ?
   - ຜູ້ຊາຍແລະຜູ້ຍິງມີຊີວິດຮູບຮ່າງທີ່ແຕກຕ່າງກັນ. ທ່ານໄດ້ປະສົບໃນເຣື່ອງນີ້ໃນຊີວິດຂອງທ່ານບໍ່ຕໍ່ເພດກົງກັນຂ້າມ? ສິ່ງນີ້ໄດ້ເປັນບັນຫາຕໍ່ທ່ານບໍ່?

6. ເອີ້ນໃຫ້ສະມາຊິກເອົາການເປັນອັນນຶ່ງອັນດຽວກັນມາປະກອບໃຊ້ໃນຊີວິດ ໃນຄອບຄົວ, ໃນບ່ອນເຮັດການ, ແລະຢູ່ໃນໂບດ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 5

# <u>ມີທາງເລືອກທີ່ບໍ່ເຊື່ອຟັງພຣະເຈົ້າ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ປະຖົມມະການ 3:1-7

**<u>ພູມຫລັງຂອງພຣະຄັມພີ</u>**: ປະຖົມມະການ 3:1-7

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ຄວາມບາບໄດ້ເຂົ້າມາໃນໂລກຊຶ່ງເປັນການເລືອກເອົາຈາກມະນຸດຄົນທຳອິດທີ່ບໍ່ເຊື່ອຟັງ.

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ຄວາມບາບໄດ້ເຂົ້າມາໃນໂລກໃນສມັຍກ່ອນ ແລະທຸກວັນນີ້ຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຮູ້ຈັກວ່າຄວາມບາບເຂົ້າມາໃນໂລກໄດ້ຢ່າງໃດ ແລະມັນມີຜົນອັນໃດໃນຊີວິຂອງຂ້າພະເຈົ້າ.

## <u>ເຂົ້າໃຈໃນພຣະຄັມພີ</u>

ໃນປະຖົມມະການພຣະເຈົ້າໄດ້ມີຣະມິດຊົງສ້າງດ້ວຍຣິດອຳນາດຂອງພຣະຄັມ. “ໃນຈັກກະວານທີ່ວ່າງເປົ່າ ພຣະເຈົ້າໄດ້ສ້າງປາ ສ້າງນົກ ແລະສ້າງມະນຸດຊາດໄວ້ (ປຖມ 1:1-31). ໃນບົດທີ 2 ໄດ້ກ່າວເຖິງເຣື່ອງການຊົງສ້າງດ້ວຍຄວາມຮັກຂອງພຣະເຈົ້າ. ພຣະອົງໄດ້ຊົງສ້າງມະນຸດດ້ວຍດິນແລະຊົງປະທານລົມຫັນໃຈໃຫ້ ພຣະອົງຍັງຮູ້ດີວ່າຜູ້ຊາຍຈະຢູ່ຄົນດຽວບໍ່ໄດ້ ພຣະອົງຈຶ່ງໄດ້ເອົາພາກສວນຈາກຂ້າງມາສ້າງເປັນຜູ້ຍິງເພື່ອເປັນຜູ້ຊ່ອຍ. ຕ້ອງເຂົ້າໃຈວ່າພຣະເຈົ້າໄດ້ສ້າງມະນຸດມາເພື່ອຈະມີຄວາມສັມພັນກັບພຣະອົງກ່ອນ

ບົດ 2 ແລະບົດ 3 ຕ້ອງເອົາໄວ້ນຳກັນເພື່ອຈະມີຄວາມເຂົ້າໃຈກັນດີ ຄືພຣະເຈົ້າໄດ້ສ້າງຜູ້ຊາຍໃຫ້ຢູ່ໃນສວນເອເດນ ແລະຕໍ່ມາພຣະອົງກໍໄດ້ປະທານຜູ້ຍິງໃຫ້ເປັນເພື່ອນ. ຕໍ່ມາອີກຜູ້ຍິງໄດ້ຖືກທົດລອງໃຈຈາກງູຊຶ່ງເປັນເຄື່ອງມືຂອງມານ ແລະຜູ້ຊາຍກໍພ້ອມໃຈກັບຜູ້ຍິງກະບົດຕໍ່ພຣະເຈົ້າດ້ວຍກິນໝາກໄມ້ທີ່ຮູ້ຈັກຄວາມດີແລະຄວາມຊົ່ວທີ່ພຣະເຈົ້າໄດ້ສັ່ງບໍ່ໃຫ້ກິນ (ປຖມ 2:9). ການກະບົດຕໍ່ພຣະເຈົ້າເປັນສາຍເຫດໃຫ້ຄວາມສັມພັນແຕກສລາຍໄປ. ພຣະເຈົ້າໄດ້ລົງໂທດພ້ອມດ້ວຍມີພຣະຄຸນຄືບໍ່ໃຫ້ມະນຸດມີສ່ວນໃນສວນອີກຕໍ່ໄປ.

ມີຫລາຍປຶ້ມໄດ້ຂຽນຂຶ້ນມາເພື່ອອະທິບາຍເພີ້ມຕໍ່ບົດ 3:1-7. ອາຈານໂປໂລໄດ້ກ່າວເຖິງເຣື່ອງນີ້ໃນໂຣມ 5:12-21, 1 ກຣທ 15:21-22. ໝາຍຄວາມວ່າໃນບົດນີ້ອາດມີການແປຫລາຍໆວິທີ ໃຫ້ອ່ານບົດດັ່ງກ່າວນີ້ຫລາຍໆເທື່ອເພື່ອຄວາມເຂົ້າໃຈເພີ້ມ. ເຣື່ອງນີ້ບໍ່ໄດ້ຈຳກັດແຕ່ເຣື່ອງ ອາດາມ, ເອວາ, ແລະງູ, ແຕ່ເປັນເຣື່ອງກະບົດຂອງທ່ານແລະຂ້າພະເຈົ້າເໝືອນກັນ.

### ແນະນຳການສອນ

**ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ**

1. ນຳເອົາກະດາດເຈັ້ຍມາໃນຫ້ອງຮຽນ ແຕ່ລະໃບໃຫ້ຂຽນເຣື່ອງດັ່ງຕໍ່ລົງໄປນີ້ໃສ່:
   - ຕົບແກ້ມສະມາຊິກໃນຄອບຄົວ
   - ຕັດໜ້າແຖວຕາມຮ້ານຄ້າ
   - ເວົ້າດູຖູກຄົນແປກໜ້າ
   - ລັກສິ່ງຂອງຈາກເພື່ອນບ້ານ
   - ລັກເອົາສິ່ງຂອງໃສ່ໃນກະຕ່າຄົນແປກໜ້າ
   - ແກວ່ງໄຂ່ໃສ່ຣົດຄົນອື່ນ

2. ຖາມຜູ້ສມັກໃຫ້ອ່ານເຈັ້ຍທີ່ຂຽນຂໍ້ທີນຶ່ງອອກສຽງດັງ ແລະສາຣະພາບຄວາມຜິດ. ຖ້າວ່າມີຄົນສມັກອ່ານຈະໃຫ້ລາງວັນ $ 10,000.00 ທ່ານຄຶດວ່າຈະມີຄົນສມັກອ່ານບໍ່?

3. ຖາມວ່າແມ່ນຫຍັງເຮັດໃຫ້ອາດາມ ແລະເອວາບໍ່ເຊື່ອຟັງພຣະເຈົ້າ?

4. ບອກໃຫ້ສະມາຊິກຈັດເປັນກຸ່ມ 2-3 ຄົນສຸດແລ້ວແຕ່ຈຳນວນຄົນໃນຫ້ອງ. ບອກໃຫ້ແຕ່ລະກຸ່ມອ່ານ ປົດ 3:1-6 ບອກໃຫ້ແຕ່ລະກຸ່ມເຮັດເປັນໂຄງຮ່າງເຖິງເຣື່ອງການທົດລອງເປັນລຳດັບໄປ. ໃຫ້ແຕ່ລະກຸ່ມລາຍງານໃຫ້ທຸກຄົນໃນຫ້ອງໄດ້ຍິນນຳ. ອັນໃດເຮັດໃຫ້ອາດາມ ແລະເອວາຕັດສິນໃຈກະບົດຕໍ່ຄຳສັ່ງຂອງພຣະເຈົ້າ?

5. ຖາມວ່າມີໃຜບໍ່ມີຄຳແນະນຳຕໍ່ອາດາມ ແລະເອວາເພື່ອເອົາຊະນະການທົດລອງໄດ້?

6. ໃຫ້ແຕ່ລະຄົນອະທິບາຍຕາມຄວາມເຂົ້າໃຈຂອງຕົນເອງເຖິງເຣື່ອງ ຄວາມດີ ແລະຄວາມຊົ່ວ. ເປັນດ້ວຍເຫດໃດມະນຸດເຮົາບໍ່ມີໃຜມີຄຸນສົມບັດບອກວ່າອັນໃດດີ ແລະອັນໃດຊົ່ວ?

7. ຂໍໃຫ້ຄົນນຶ່ງອ່ານປົດ 3:7 ອອກສຽງດັງ ໃຫ້ສົນທະນາກັນມີການປ່ຽນແປງເກີດຂຶ້ນຫລັງຈາກອາດາມ ແລະເອວາໄດ້ກະບົດ (ແຕກແຍກ, ລະອາຍ, ແລະຮູ້ສຶກຜິດ)

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 6
# ຜົນໄດ້ຮັບທີ່ບໍ່ເຊື່ອຟັງພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ປະຖົມມະການ 3:8-24

**ພູມຫລັງຂອງພຣະຄັມພີ**: ປະຖົມມະການ 3:8-24

**ຈຸດສຳຄັນສຳລັບບົດຮຽນນີ້**: ຄວາມບາບໄດ້ເຮັດໃຫ້ມີຄວາມຢ້ານ ຄວາມລະອາຍ, ຖິ້ມໃສ່ຄົນອື່ນ ແລະການຕາຍ.

**ຄຳຖາມເພື່ອການຄົ້ນຄວ້າ**: ແມ່ນຫຍັງເປັນຜົນສະທ້ອນຈາກຄວາມບາບ?

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຮູ້ຈັກ ແລະອົດບໍ່ເຮັດຄວາມຜິດບາບ ແລະຜົນຂອງຄວາມຜິດບາບ.

## ເຂົ້າໃຈໃນພຣະຄັມພີ

ບົດຮຽນທີ່ແລ້ວໄປນີ້ໄດ້ຈົບລົງເວລາອາດາມແລະເອວາໄດ້ເອົາໃບໄມ້ມາຫຍິບເປັນເຄື່ອງນຸ່ງເພາະໄດ້ກິນໝາກໄມ້ຈາກຕົ້ນຮູ້ຈັກຄວາມດີແລະຄວາມຊົ່ວ (ປຖມ 2:17, 3:6). ເວລາພຣະເຈົ້າຍັງບໍ່ທັນມາຫາພວກເຂົາຮູ້ສຶກບາງຢ່າງທີ່ຜິດແປກໄປ. ບົດຮຽນວັນນີ້ໄດ້ກ່າວເຖິງໂທດຮ້າຍຂອງການບໍ່ເຊື່ອຟັງ.

ໃນບົດຮຽນນີ້ພຣະເຈົ້າໄດ້ຖາມຫລາຍໆຢ່າງບໍ່ແມ່ນເພື່ອຢາກຮູ້ ເພາະພຣະອົງຮູ້ແລ້ວ ແຕ່ຢາກບອກເຖິງຄວາມສັມພັນທີ່ຖືກທຳລາຍລົງລະຫວ່າງພຣະເຈົ້າແລະທັງສອງຄົນໃນສວນນັ້ນ. ພວກເຮົາອາດເວົ້າໄດ້ວ່າຖືກຕັດສິນເພາະການບໍ່ເຊື່ອຟັງ. ພຣະເຈົ້າເປັນຜູ້ໂຈດ ພຣະອົງຊົງຖາມຄຳຖາມຫລາຍຄຳ. ຕອນຈົບພຣະເຈົ້າໄດ້ປະກາດເຖິງການລົງໂທດຕໍ່ສາມຢ່າງໃນເຣື່ອງການທົດລອງ.

ພຣະເຈົ້າລົງໂທດອາດາມແລະເອວາ ຄືພວກເຂົາຖືກໄລ່ອອກຈາກສວນເອເດນ ແລະທັງສາມໄດ້ຖືກຕິຕຽນລົງໂທດ: ງູ, ເອວາ, ອາດາມ. ແຕ່ຕ້ອງເຂົ້າໃຈວ່າການລົງໂທດບໍ່ໄດ້ມີພລັງເໜືອຄວາມຮັກແລະພຣະຄຸນຂອງພຣະເຈົ້າ. ພຣະເຈົ້າຍັງມີຄວາມເມດຕາສົງສານ ແນ່ນອນຄວາມບາບໄດ້ເປັນຜົນຮ້າຍຕໍ່ມະນຸດທີ່ສຸດ ພຣະເຈົ້າໄດ້ປະທານການຄືນດີແລະໃຫ້ຄວາມຫວັງແກ່ມະນຸດໃນທີ່ສຸດ.

### ແນະນຳການສອນ

**ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ**

1. ກ່າວຕໍ່ຫ້ອງຮຽນວ່າປະວັດສາດໄດ້ພະຍາຍາມບໍ່ຈົດເຣື່ອງຜິດພາດຫລາຍໆຢ່າງ. ໃຫ້ອ່ານເຣື່ອງຕໍ່ລົງໄປນີ້ເພື່ອຮຽນຮູ້ວ່າໃນປະວັດສາດບໍ່ໄດ້ເວົ້າເຖິງເຣື່ອງຜິດຢ່າງລະອາຍ.

- ນັກເທສນາຜູ້ເທສນາເຣື່ອງຮັ່ງມີເປັນດີ ໃນທີ່ສຸດໄດ້ຖືກຄຸກຍ້ອນເຣື່ອງເງິນ ແມ່ນໃຜ?

- ນັກເທສນາເກົ່າ ຫລິ້ນປີອາໂນມ່ອນ ໃນທີ່ສຸດຖືກຈັບເພາະໄປໂຮງແຮມກັບຍິງໂສເພນີຄົນນີ້ ແມ່ນໃຜ?

2. ໃຫ້ສົນທະນາກັນເຖິງເຣື່ອງຜູ້ສຳຄັນອາດເປັນນັກການເມືອງ, ຂ້າຣາຊການ, ນັກຮ້ອງດັງ, ນັກກິລາແລະອື່ນໆ. ບອກໃຫ້ແຕ່ລະຄົນເລົ່າເຖິງເຫດການທີ່ພວກເຂົາຈຳໄດ້ຈາກ ໂທຣະທັດ, ໜັງສືພິມ, ແລະປະສົບການ. ບອກວ່າບົດຮຽນນີ້ໄດ້ຮຽນສືບສວນສິ່ງມະນຸດພະຍາຍາມປົກປິດໃນການບໍ່ເຊື່ອຟັງພຣະເຈົ້າ.

3. ອ່ານພຣະຄັມພີປະຖົມມະການ 3:8-24. ຮ້ອງຂໍໃຫ້ມີຜູ້ສມັກຫລິ້ນລະຄອນກ້ອມ: ຜູ້ນຶ່ງເປັນພຣະເຈົ້າ, ຜູ້ນຶ່ງເປັນອາດາມ ແລະອີກຜູ້ນຶ່ງເປັນເອວາ. ບອກໃຫ້ສະມາຊິກໃນຫ້ອງຟັງສຽງ, ຄຳເວົ້າ, ແລະການກະທຳຂອງແຕ່ລະຄົນ.

4. ອ່ານປະຖົມມະການ 3:9-13. ຂຽນໃສ່ກະດານເປັນສາມແຖວ: ອາດາມ, ເອວາ, ແລະງູເປັນຫົວຂໍ້. ບອກໃຫ້ສະມາຊິກຂຽນທຸກສິ່ງຂອງແຕ່ລະຄົນໃສ່ຊ່ອງວ່າງຕາມລຳດັບໄປ. ບອກວ່າທຸກຄົນນີ້ຍັງມີການທົດລອງຕໍ່ພວກເຮົາແຕ່ລະວັນ.

5. ຖາມວ່າເວລາພຣະເຈົ້າມາຫາອາດາມແລະເອວາ ພຣະອົງບໍ່ໄດ້ຫາເຣື່ອງໃສ່ພວກເຂົາ. ພຣະເຈົ້າໄດ້ເຮັດຫຍັງເພື່ອຈະສະແດງເຖິງພຣະເມດຕາແລະຄວາມຫ່ວງຫັມ?

6. ອະທິບາຍເຖິງເຄື່ອງນຸ່ງທີ່ພຣະເຈົ້າປະທານໃຫ້ໃນ ປົດ 3:21 ມີຄວາມໝາຍຢ່າງໃດ?

7. ຖາມສະມາຊິກໃນຫ້ອງວ່າ ທຸກວັນນີ້ພວກເຮົາກໍໄດ້ເຮັດຜິດເໝືອນກັນ ໃຫ້ແຕ່ລະຄົນບອກເຣື່ອງຂອງຕົນທີ່ໄດ້ຕັດສິນໃຈ ແລະໄດ້ລົງມືເຮັດຜິດມີອັນໃດບໍ່?

8. ສົນທະນາກັນເຖິງເຣື່ອງພຣະເຈົ້າພໍພຣະທັຍທີ່ຈະໃຫ້ພວກເຮົາຄືນດີກັບພຣະອົງ, ແຕ່ພວກເຮົາຕ້ອງເຮັດອັນໃດກ່ອນ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 7

# ພຣະເຈົ້າຊົງໃຫ້ຄຳເຕືອນ ແລະຊົງພິພາກສາຄວາມບາບ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 4: 1-16, 25-26

ພູມຫລັງຂອງພຣະຄັມພີ: ປະຖົມມະການ 4

ຈຸດສຳຄັນສຳລັບບົດຮຽນນີ້: ນິສັຍເຮັດບາບສາມາດນຳໄປສູ່ການກະທຳທີ່ຮ້າຍແຮງ

ຄຳຖາມເພື່ອຄົ້ນຄວ້າ: ແມ່ນຫຍັງຄືຜົນຂອງຄວາມຄຽດຮ້າຍແລະຄວາມອິດສາຂອງຂ້ອຍ?

ຈຸດປະສົງຂອງການສຶກສານີ້: ເພື່ອສຳຣວດເບິ່ງນິສັຍຂອງຂ້ອຍທີ່ມີຕໍ່ພຣະເຈົ້າແລະຕໍ່ຜູ້ອື່ນ.

ອ່ານລວບ: ຄວາມຄຽດຂອງກາອິນພາລາວໃຫ້ຂ້ານ້ອງຊາຍອາເບັນ ແລະພາລາວຫ່າງໄກຈາກພຣະເຈົ້າ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເອົາສະຖິຕິຕໍ່ໄປນີ້ໃຫ້ນັກຮຽນເບິ່ງ (ທ່ານອາດຈະຂຽນໃສ່ໂປສເຕີໄວ້ລ່ວງໜ້າ)

   **ລາຍງານການຄາຕະກັມໃນປີ 2010 ໂດຍເອບບີໄອ (FBI)**

   - 54 ເປີເຊັນ ຖືກຂ້າໂດຍຄົນທີ່ຮູ້ຈັກກັນ (ຄົນເຄີຍພົບ, ໝູ່, ຄົນຂ້າງບ້ານ, ຄູ່ຮັກ)
   - 24. 8 ເປີເຊັນຖືກຂ້າໂດຍສະມາຊິກໃນຄອບຄົວ
   - 37 ເປີເຊັນຖືກຂ້າໂດຍສາມີ ຫລືຊາຍຄູ່ຮັກ.
   - 41. 8 ເປີເຊັນຖືກຂ້າໃນຂະນະທີ່ຖືກຖຽງກັນ

2. ຫລັງຈາກເບິ່ງສະຖິຕິແລ້ວ ຊັກຊວນນັກຮຽນໃຫ້ສະແດງຄວາມເຫັນວ່າແມ່ນຫຍັງເປັນບໍ່ເກີດຂອງຄວາມຮຸນແຮງລະຫວ່າງສະມາຊິກໃນຄອບຄົວ. ເລີ້ມການສຶກສາພຣະຄຳໂດຍເວົ້າວ່າບົດຮຽນນີ້ຈະພິສູດເບິ່ງຊາຍຜູ້ນຶ່ງທີ່ປ່ອຍໃຫ້ຄວາມໂມໂຫແລະຄວາມອິດສາຄຸ້ມຄອງຈິດໃຈຈົນເຖິງຂັ້ນຂ້າຄົນ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ອ່ານ ປະຖົມມະການ 4: 1-4. ເບິ່ງຄວາມແຕກຕ່າງຂອງສອງອ້າຍນ້ອງໃນການນຳເຄື່ອງຖວາຍມາໃຫ້ພຣະເຈົ້າ. ເບິ່ງບົດຮຽນແລ້ວສົນທະນາວ່າເປັນຫຍັງພຣະເຈົ້າຈຶ່ງພໍໃຈເຄື່ອງຖວາຍຂອງອາເບັນ

ຫລາຍກວ່າຂອງກາອິນ.ຖາມ:ຫລັກການເລື່ອງ "ນຳສິ່ງທີ່ດີທີ່ສຸດມາຖວາຍພຣະເຈົ້າ" ມີຜົນສະທ້ອນແນວໃດແດ່ກັບການຖວາຍໃນສມັຍນີ້?

4. ອ່ານຂໍ້ 5 ແລະສົນທະນາເລື່ອງຄວາມໂມໂຫຂອງກາອິນ. ຖາມ: ຖ້າເຈຕນາຂອງກາອິນແມ່ນການຖວາຍກຽດແດ່ພຣະເຈົ້າ, ການຕອບຮັບສະພາບການຂອງລາວຈະແຕກຕ່າງຈາກນັ້ນວິທີໃດ? ໃຫ້ຜູ້ນຶ່ງອ່ານ ພຣະນິມິດ 3:19. ຖາມ: ຖ້າກາອິນຍອມປ່ຽນແປງແທນທີ່ຈະຄຽດຮ້າຍ ຊີວິດລາວຈະແຕກຕ່າງຢ່າງໃດ?

5. ນຳພາການຕອບແລະສົນທະນາຄຳຖາມ 1 ແລະ 3 ຈາກບົດຮຽນ:
   - ແມ່ນຫຍັງເປັນຕົ້ນເຫດເຮັດໃຫ້ກາອິນຄຽດແຄ້ນໃຫ້ອາເບັນ? ເປັນຫຍັງຄວາມໂມໂຫແລະຄວາມອິດສາຈຶ່ງເຮັດໃຫ້ກາອິນຕັດສິນໃຈເຊັ່ນນັ້ນ?
   - ຄວາມຄຽດຮ້າຍ, ຄວາມອິດສາ, ແລະຄວາມຍິ່ງຍະໂສຈະກະທົບຕໍ່ທັສນະຂອງພວກເຮົາກັບພຣະເຈົ້າ ແລະຄົນອື່ນໆຢ່າງໃດ?

6. ອ່ານ 4: 6-7. ຖາມ: ພຣະເຈົ້າຊົງຕ້ອງການຫຍັງເວລາພຣະອົງບອກກາອິນໃຫ້ "ເຮັດໃນສິ່ງທີ່ຖືກຕ້ອງ"? ຄວາມບາບແນວໃດທີ່ຢູ່ຕໍ່ໜ້າກາອິນ? ກາອິນ ແລະຄຣິສຕຽນທັງຫລາຍຈະສາມາດເອົາຊະນະທ່າທີໃນທາງບາບ ແລະການທົດລອງໄດ້ຢ່າງໃດ?

7. ອ່ານ 4: 8-12. ຖາມ: ມີຫຍັງໃນຂໍ້ 8 ທີ່ບອກໃຫ້ຮູ້ວ່າການຂ້າອາເບັນຂອງກາອິນເປັນເລື່ອງທີ່ໄດ້ວາງແຜນການລ່ວງໜ້າ? ກາອິນບໍ່ຟັງການຕັກເຕືອນຂອງພຣະເຈົ້າແຕ່ໄປສະແດງຄວາມໂຫດຮ້າຍກັບຄົນທີ່ບໍ່ມີຄວາມຜິດ.

8. ໃຫ້ນັກຮຽນເບິ່ງ 4: 11-12 ແລະຊອກເບິ່ງວ່າໂທດຂອງກາອິນມີຫຍັງແດ່. ສົນທະນາ: ເປັນຫຍັງພຣະເຈົ້າຈຶ່ງຊົງເອົາການລົງໂທດກາອິນໄປກ່ຽວຂ້ອງກັບດິນນາທີ່ລາວກຳລັງທຳມາຫາກິນຢູ່.

9. ອ່ານ 4: 13-14. ພິຈາຣະນາຄຳໂຕ້ຕອບຂອງກາອິນ ແລະທັສນະຂອງລາວກ່ຽວກັບໂທດທີ່ໄດ້ຮັບ; ເວົ້າວ່າ: ກາອິນໄດ້ຮັບໂທດເພີ້ມທີ່ພຣະເຈົ້າຊົງສັ່ງ (ການຫ່າງອອກຈາກພຣະເຈົ້າ, ການຖືກຂ້າ) ບອກເຖິງຈິດໃຈຂອງລາວ; ກາອິນເປັນຫ່ວງຄວາມລຳບາກ ແລະຄວາມປອດພັຍໃນອະນາຄົດ; ເພາະລາວເປັນຜູ້ຂ້າຄົນ ລາວຄົງຄິດວ່າຄົນອື່ນຈະຕ້ອງຂ້າລາວເພື່ອແກ້ແຄ້ນໃຫ້ອາເບັນ.

10. ເວົ້າວ່າ:ເບິ່ງຄຳຕອບຂອງພຣະເຈົ້າໃນຂໍ້ 15 ສົນທະນາເລື່ອງຄວາມເມດຕາຂອງພຣະເຈົ້າຕໍ່ກາອິນໃນຂະນະທີ່ກາອິນບໍ່ໄດ້ສະແດງຄວາມເມດຕາຕໍ່ນ້ອງ. ໃຫ້ຜູ້ນຶ່ງແບ່ງປັນປະສົບການເລື່ອງຄວາມເມດຕາຂອງພຣະເຈົ້າ ທີ່ຕົນບໍ່ຄວນໄດ້ຮັບ.

11. ອ່ານຂໍ້ 16.   ຖາມ:  ກາອິນຈະໜີຫ່າງຈາກພຣະເຈົ້າໄດ້ຢ່າງໃດ   ໃນເມື່ອພຣະເຈົ້າຊົງສະຖິດຢູ່ທຸກບ່ອນ? ສົນທະນາ: ການປະພຶດຂອງກາອິນແມ່ນຖືກກັບອຸປນິສັຍຂອງລາວບໍ່?

12. ອ່ານ ປຖກ 4: 25-26;  ອະທິບາຍວິທີທີ່ພຣະເຈົ້າໃຫ້ອາເບັນກັບຄືນມີຊີວິດໂດຍການກຳເນີດຂອງເຊດ. ຖາມ: ການນະມັສການຂອງພວກເຮົາມີຫຍັງທີ່ສືບທອດມາຈາກແບບຢ່າງຂອງອາເບັນແລະຄວາມເຊື່ອຂອງລາວ?

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

13. ເວົ້າວ່າ: ພຣະເຈົ້າຊົງສະແດງຄວາມອົດທົນກັບກາອິນ ແລະພ້ອມທີ່ຈະອະພັຍໂທດ ສົນທະນາແລະໃຫ້ຕົວຢ່າງຂອງຄວາມຍິ່ງແລະຄວາມຄຽດຮ້າຍຂອງຄົນໃນສມັຍນີ້. ຖາມ:ເປັນຫຍັງຄົນມັກສະແດງຄວາມໂຫດຮ້າຍອອກ ແທນທີ່ຈະສ້າງຄວາມສັນຕິໂດຍການກັບໃຈ?   ແບ່ງປັນ: ປະສົບການເຣື່ອງພຣະຄຸນແລະການອະພັຍຂອງພຣະເຈົ້າ ເວລາທ່ານສາລະບາບຄວາມຜິດບາບຕໍ່ພຣະອົງ.

14. ປິດດ້ວຍການອ້ອນວອນຂໍການຄືນດີແລະສັນຕິສຸກໃນຄວາມສັມພັນກັບພຣະເຈົ້າແລະຄົນອື່ນໆ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 8

# <u>ພຣະເຈົ້າຊົງເດີນກັບຄົນຊອບທັມໃນໂລກທີ່ຊົ່ວຊ້າ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>: ປະຖົມມະການ 6

<u>ພູມຫລັງຂອງພຣະຄັມພີ</u>: ປະຖົມມະການ 6

<u>ຈຸດສຳຄັນສຳລັບບົດຮຽນນີ້:</u> ໃນຂະນະທີ່ມະນຸດເຮັດຄວາມຊົ່ວຊ້າຫລາຍຂຶ້ນ, ພຣະເຈົ້າຊົງເດີນກັບຄົນຊອບທັມແລະປາສຈາກຄວາມຜິດ.

<u>ຄຳຖາມເພື່ອຄົ້ນຄວ້າ</u>: ພວກເຮົາຈະດຳລົງຊີວິດທີ່ຊອບທັມແລະປາສຈາກຄວາມຜິດໃນຂະນະທີ່ພວກເຮົາຢູ່ໃນໂລກທີ່ເປື່ອຍເນົ່ານີ້ໄດ້ຢ່າງໃດ?

<u>ຈຸດປະສົງຂອງການສຶກສານີ້:</u> ດຳລົງຊີວິດທີ່ຊອບທັມແລະປາສຈາກຄວາມຜິດໃນໂລກທີ່ເປື່ອຍເນົ່າໂດຍການດຳເນີນຊີວິດໃນພຣະເຈົ້າ.

<u>ອ່ານລວບ</u>: ເພື່ອໂຕ້ຕອບຄວາມຊົ່ວຊ້າທີ່ໄດ້ເພີ້ມທະວີຂຶ້ນ, ພຣະເຈົ້າຊົງໄດ້ລົງໂທດມະນຸດດ້ວຍນ້ຳຖ້ວມໂລກຢ່າງພິນາດ, ແຕ່ພຣະອົງໄດ້ຊົງຮັກສາຜູ້ຊອບທັມຄົນນຶ່ງແລະຄອບຄົວຂອງລາວໄວ້.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຕຽມກອບປີຮູບ "ວອນໂດຢູ່ໃສ?" ຫລາຍໆໃບ ຫລືຮູບທີ່ໄປຮ່ວມປະຊຸມຊຶ່ງມີຄົນຫລາຍໆຮ້ອຍຄົນ. ຮູບພາບນີ້ຈະທ້າທາຍພວກເຮົາພໍສົມຄວນ ເວລາເຮົາຈະຊອກຫາຜູ້ໃດຜູ້ນຶ່ງທີ່ພວກເຮົາຮູ້.
2. ໃນຂນະທີ່ນັກຮຽນພາກັນຊອກເບິ່ງຮູບພາບແລະແບ່ງປັນໃຫ້ໝູ່ເບິ່ງນຳ, ເວົ້າວ່າ: ພວກເຮົາມັກເວົ້າວ່າ "ນຶ່ງໃນລ້ານ" ເພື່ອອະທິບາຍວ່າບຸກຄົນນັ້ນເປັນຄົນພິເສດ, ແຕກຕ່າງໝູ່, ຫລືບໍ່ແມ່ນທັມມະດາ. ໃນປະຖົມມະການ ບົດທີ 5-6, ຜູ້ຂຽນໄດ້ແນະນຳບຸກຄົນຜູ້ນຶ່ງທີ່ຕ້ອງສາຍຕາຂອງພຣະເຈົ້າ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ໃຫ້ຜູ້ນຶ່ງອ່ານ ປຖກ 5:15-27. ຖາມ: ເອໂນກມີຫຍັງແຕກຕ່າງ? ເບິ່ງຂໍ້ 22-24, ເອໂນກເປັນຜູ້ດຽວໃນເຊື້ອສາຍຂອງລາວທີ່ "ດຳເນີນຊີວິດກັບພຣະເຈົ້າ." ພານັກຮຽນເບິ່ງ ປຖກ 6: 8 ແລະຕັ້ງຄຳຖາມ: ໂນອາມີຄວາມແຕກຕ່າງແນວໃດ? ຫລັງຈາກມີຜູ້ຕອບ, ໃຫ້ເວົ້າວ່າ: ເພາະມະນຸດໄດ້ເຮັດບາບ, ພຣະເຈົ້າຊົງວາງແຜນທຳລາຍມວນມະນຸດຊາດ, ແຕ່ພຣະອົງໄດ້ເລືອກຄົນຊອບທັມຜູ້ນຶ່ງແລະຄອບຄົວຂອງລາວໄວ້.

4. ເພື່ອເບື້ອງຫລັງ ໃຫ້ນັກຮຽນອ່ານ ປຖກ 6:1-4, ເວົ້າວ່າ: ເພື່ອຊ່ວຍໃຫ້ເຂົ້າໃຈສະພາບການໃນສມັຍນັ້ນ ໃຫ້ອ່ານ ຂໍ້ 5-7 ແລະອະທິບາຍສະພາບຈິດວິນຍານຂອງໂລກທີ່ໂນອາໃຊ້ຊີວິດຢູ່ນັ້ນ.
5. ອ່ານ ຂໍ້ 8 ດັງໆແລະເວົ້າວ່າ: ພຣະຄໍາຂໍ້ນີ້ປຽບເໝືອນຂອງຫວານທີ່ຢູ່ກາງຂອງສົ້ມ. ຂຽນຂໍ້ຄວາມເຫລົ່ານີ້ໃສ່ກະດານ: ຕິດສນິດ, ກາຍເປັນ, ພົວພັນ, ລົງມືທໍາ.
6. ຈັດແບ່ງເປັນກຸ່ມນ້ອຍເພື່ອສົນທະນາເຣື່ອງຄວາມສັມພັນລະຫວ່າງ ໂນອາ ກັບພຣະເຈົ້າໃນສັງຄົມທີ່ກໍາລັງຊຸດໂຊມໂດຍໃຊ້ຄໍາເວົ້າໃນກະດານ. ແນະນໍາໃຫ້ກຸ່ມໃຊ້ພຣະຄັມພີເພີ້ມ (ໂດຍສະເພາະ ຂໍ້ 9) ເພື່ອຈະເຂົ້າໃຈຄຸນລັກສນະຂອງໂນອາ. ຫລັງຈາກກຸ່ມໄດ້ສໍາຣວດແລະສົນທະນາແລ້ວ, ຂໍໃຫ້ແບ່ງປັນກັບທຸກຄົນ. ແລ້ວໃຫ້ຜູ້ນຶ່ງຂຽນຄວາມເວົ້າແລະປໂຍກສໍາຄັນໃສ່ກະດານ.
7. ເວົ້າວ່າ: ຜູ້ຂຽນປະຖົມມະການ ໄດ້ໃຊ້ຄໍາເວົ້າໜັກເພື່ອບັນລະຍາຍຄວາມຮູ້ສຶກເສັຽໃຈຂອງພຣະເຈົ້າ. ອ່ານ ປຖກ 6: 6-13 ແບບງຽບໆແລ້ວໃຊ້ຄວາມເວົ້າທີ່ສະແດງອອກເຖິງຄວາມຮູ້ສຶກ. ຖາມ: ເປັນຫຍັງຜູ້ຂຽນໄດ້ບອກພວກເຮົາເຖິງຄວາມຮູ້ສຶກພາຍໃນຈິດໃຈຂອງພຣະເຈົ້າ?
8. ຈັດຕຽມນັກຮຽນຜູ້ນຶ່ງໄວ້ລ່ວງໜ້າເພື່ອສລຸບຂໍ້ 14-21, ຣວມທັງແຜນການສ້າງເຮືອໃຫຍ່ຂອງພຣະເຈົ້າ, ແຜນການເຣື່ອງນ້ໍາຖ້ວມໂລກ, ແລະແຜນການເຣື່ອງພັນທະສັນຍາແລະການສ້າງຂຶ້ນໃໝ່.
9. ອ່ານຂໍ້ 22 ຊຶ່ງບອກວ່າ ໂນອາໄດ້ເຮັດທຸກຢ່າງທີ່ພຣະເຈົ້າຊົງສັ່ງລາວ ເວົ້າວ່າ: ສິ່ງນີ້ອາດຈະເປັນສິ່ງທີ່ເຮັດໃຫ້ໂນອາຕ້ອງຕາ (ຖືກໃຈ) ພຣະເຈົ້າ.

<u>ນໍາພຣະທັມໄປໃຊ້ໃນຊີວິດ **(ໃຊ້ເວລາ 15 ນາທີ)**</u>

10. ອ່ານຂໍ້ 22 ອີກ ແລ້ວໃຫ້ທຸກຄົນຕັ້ງໃຈເບິ່ງຄໍາເວົ້າ 4 ຄໍາທີ່ໄດ້ຂຽນໄວ້ໃນກະດານ 1. ຕິດສນິດ, ມີຄວາມສັມພັນອັນດີກັບພຣະອົງ (ຂໍ້ 9), 2. ກາຍເປັນ, ເຕີບໃຫຍ່ເໝືອນກັບພຣະອົງທຸກໆວັນ (ຂໍ້ 9), 3. ພົວພັນ, ມີຄວາມສັມພັນດີກັບສິ່ງທີ່ພຣະເຈົ້າຊົງສ້າງໄວ້ (ຂໍ້ 9), 4. ລົງມືທໍາ, ເຊື່ອຟັງແລະປະຕິບັດຕາມຄໍາສັ່ງສອນຂອງພຣະອົງ (ຂໍ້ 22).
11. ແນະນໍາໃຫ້ນັກຮຽນຕິດຕາມພຣະເຈົ້າ ໃຫ້ເປັນເກືອແລະແສງສວ່າງໃນໂລກທີ່ກໍາລັງມືດມົນ. ເວົ້າວ່າ: ເພາະໂນອາເດີນກັບພຣະເຈົ້າທຸກໆວັນ ລາວຈຶ່ງໄດ້ຍິນສຽງຂອງພຣະອົງຫລາຍກວ່າສຽງອື່ນໆ. ໃຫ້ເວລາສົນທະນາ.
12. ຊັກຊວນນັກຮຽນໃຫ້ພິຈາຣະນາຄໍາຖາມຕໍ່ໄປນີ້:
    - ພຣະເຈົ້າຊົງເຫັນການປະພຶດຂອງທ່ານບໍ່?
    - ພຣະເຈົ້າຊົງສັງເກດເຫັນຫຍັງໃນຕົວທ່ານ?
    - ການປະພຶດຂອງທ່ານເຮັດໃຫ້ພຣະເຈົ້າດີໃຈຫລືເສົ້າໃຈ?
    - ການປະພຶດຂອງທ່ານສະແດງເຖິງຈິດໃຈຂອງທ່ານແນວໃດແດ່ ກ່ຽວກັບພຣະເຈົ້າ?
13. ອະທິຖານປິດການສຶກສາພຣະຄໍາດ້ວຍການຂໍຖວາຍຕົວ ເພື່ອດໍາເນີນຊີວິດທີ່ຊອບທັມແລະປາສຈາກຄວາມຜິດ ຖ້າມກາງໂລກທີ່ຊົ່ວຊ້າ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 9

# ນ້ຳຖ້ວມ: ການພິພາກສາ ແລະການເລີ້ມໃໝ່ຂອງພຣະເຈົ້າ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ປະຖົມມະການ 7: 1-4, 17-24; 8: 1-5, 13-16, 20-22

ພູມຫລັງຂອງພຣະຄັມພີ: ປະຖົມມະການ 7-8

ຈຸດສຳຄັນສຳລັບບົດຮຽນນີ້: ພຣະເຈົ້າຊົງພິພາກສາຄວາມບາບດ້ວຍນ້ຳຖ້ວມ, ແຕ່ພຣະອົງຊົງໃຫ້ໂອກາດມະນຸດໄດ້ເລີ້ມໃໝ່.

ຄຳຖາມເພື່ອຄົ້ນຄວ້າ: ພຣະເຈົ້າໄດ້ຊົງໃຫ້ໂອກາດທ່ານໂດຍຊ່ວຍກູ້ຈາກພັຍແລະໃຫ້ເລີ້ມໃໝ່ວິທີໃດ?

ຈຸດປະສົງຂອງການສຶກສານີ້: ເພື່ອຂອບພຣະຄຸນພຣະເຈົ້າທີ່ຊົງຊ່ວຍກູ້ຈາກພັຍແລະໃຫ້ເລີ້ມໃໝ່.

ອ່ານລວບ: ຫລັງຈາກການສ້າງເຮືອໃຫຍ່ແລ້ວ ໂນອາໄດ້ນຳຄອບຄົວແລະສັດທັງຫລາຍເຂົ້າໄປໃນເຮືອຊຶ່ງເປັນບ່ອນທີ່ພວກເຂົາຈະຢູ່ລອດແລະເລີ້ມຕົ້ນພັນທະສັນຍາໃໝ່ລະຫວ່າງມະນຸດແລະພຣະເຈົ້າ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ກ່ອນນັກຮຽນມາເຖິງໃຫ້ເຮັດໃບປະກາດຂ່າວນ້ອຍໆໄປວາງໄວ້ແຕ່ລະຕັ່ງທີ່ນັກຮຽນຈະນັ່ງ; ໃນເຈັ້ຽນັ້ນໃຫ້ຂຽນວ່າ "ມື້ນີ້ບໍ່ມີຮຽນເພາະຝົນຕົກ; ເຊີນກັບມາອາທິດໜ້າເພື່ອສຶກສາຕໍ່."
2. ຂະນະທີ່ນັກຮຽນກຳລັງອ່ານເຈັ້ຽຢູ່, ໃຫ້ຢືນຢູ່ຕໍ່ໜ້ານັກຮຽນແລ້ວເປີດຄັນຮົ່ມ. ຖາມ: ທ່ານເຄີຍຜິດແຜນ ເພາະຝົນຕົກບໍ່? ທ່ານເຄີຍວາງແຜນໄປທ່ຽວແຕ່ຕ້ອງຍົກເລີກເພາະຝົນຕົກບໍ່? ຫລັງຈາກໃຫ້ບາງຄົນຕອບແລ້ວໃຫ້ເວົ້າວ່າ ບາງຄັ້ງມີແຕ່ຂອງດີຫລາຍໂພດເລີຍກາຍເປັນຂອງບໍ່ດີ! ຕົວຢ່າງ: ຝົນເລີ້ມຄ່ອຍໆ ແລະບໍ່ດົນກໍແຮງຂຶ້ນໄປເລື້ອຍໆຈົນເຮັດໃຫ້ການສລອງຂ້າງນອກຕ້ອງໄດ້ຢຸດ ຫລືບາງເທື່ອກໍເກີດນ້ຳຖ້ວມເສັຽຫາຍທັງສິ່ງຂອງແລະຊີວິດ.
3. ຖາມ: ເປັນຫຍັງພຣະເຈົ້າຈຶ່ງຊົງອະນຸຍາດໃຫ້ນ້ຳຖ້ວມໂລກ? ເວົ້າວ່າ: ພຣະເຈົ້າຊົງພິພາກສາຄວາມຜິດບາບດ້ວຍນ້ຳຖ້ວມ, ແຕ່ພຣະອົງໄດ້ຊົງໃຫ້ໂອກາດມະນຸດທີ່ຈະເລີ້ມຕົ້ນໃໝ່.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

4. ພານັກຮຽນເບິ່ງປະຖົມມະການ 7; ແລະໃຫ້ທຸກຄົນເບິ່ງບົດຮຽນສຳລັບມື້ນີ້:
    - ຕຽມການພິພາກສາ (ປຖກ 7: 1-4)
    - ການພິພາກສາໄດ້ມາເຖິງ (ປຖກ 7: 17-24)

- ຕຽມທີ່ຈະເລີ້ມໃໝ່ (ປຖກ 8: 1-5)
- ຈຸດເລີ້ມຕົ້ນໃໝ່ (ປຖກ 8: 13-16, 20-22)

5. ອ່ານ ປຖກ 7: 1-4 ແລ້ວໃຫ້ພວກນັກຮຽນຕອບຄຳຖາມຕໍ່ໄປນີ້:
   - ພຣະເຈົ້າຊົງສັ່ງຫຍັງແດ່?
   - ເປັນຫຍັງຈຶ່ງຕ້ອງຈັດລຳດັບຢ່າງລະອຽດແທ້? (ຄ້າຍໆກັບຢູ່ໃນ ປຖກ 6: 13-16)
   - ການແບ່ງແຍກລະຫວ່າງສັດທີ່ມີມົນທິນ ແລະສັດທີ່ບໍ່ມີມົນທິນມີຄວາມສຳຄັນແນວໃດ?
   - ແມ່ນຫຍັງຄືແຜນການໃຫຍ່ຂອງພຣະເຈົ້າ?
   - ສີ່ສິບມື້ສີ່ສິບຄືນມີຄວາມສຳຄັນແນວໃດ?
   - ທ່ານຄິດວ່າການທີ່ພຣະເຈົ້າຊົງເຕືອນເຣື່ອງການພິພາກສາທີ່ຈະມາ ເປັນເຣື່ອງສຳຄັນບໍ່?
6. ໃຫ້ຜູ້ນຶ່ງອ່ານ ປຖກ 7:17-24. ຫລັງຈາກນັ້ນໃຫ້ຖາມ: ພຣະສັນຍາເຣື່ອງການພິພາກສາສຳເຣັດວິທີໃດ? ໃຫ້ເວລາສົນທະນາເຣື່ອງຄວາມສຳຄັນກ່ຽວກັບຄຳເວົ້າຕໍ່ໄປນີ້: ທຳລາຍໝົດທຸກຢ່າງ, ນ້ຳຫລາຍຂຶ້ນ, ນ້ຳໄດ້ຖ້ວມພູຜາໜ່ວຍສູງທີ່ສຸດ, ທຸກສິ່ງທີ່ຫາຍໃຈໄດ້ເທິງແຜ່ນດິນໂລກໄດ້ຕາຍໄປໝົດ.
7. ເວົ້າເຣື່ອງການພິພາກສາ ແລະການເລີ້ມຕົ້ນໃໝ່ຂອງຊົນຊາດອິສຣາເອັນໃນພຣະສັນຍາເດີມ (ເບິ່ງອົບພະຍົບ, ພວກຜູ້ປົກຄອງ, 1 ຊາມູເອນ, ແລະເຢເຣມີຢາ)
8. ອ່ານ ປຖກ 8: 1 ໃຫ້ທຸກຄົນຟັງ; ເວົ້າວ່າ: ພຣະຄຳຂໍ້ນີ້ແມ່ນຈຸດສຳຄັນໃນເຣື່ອງຂອງໂນອາ; ພາທຸກຄົນເວົ້ານຳກັນແຮງໆວ່າ, "ພຣະເຈົ້າບໍ່ໄດ້ລືມໂນອາ…" ຖາມ: ຄຳເວົ້ານີ້ມີຄວາມໝາຍຫຍັງສຳລັບຜູ້ທີ່ຫວັງໃຈໃນພຣະເຈົ້າ?
9. ໃຫ້ຜູ້ນຶ່ງອ່ານ ປຖກ 8: 1-5. ເວົ້າວ່າ: ໃນພຣະຄຳຕອນນີ້ມີລາຍລະອຽດທີ່ພຣະເຈົ້າຊົງຕຽມທີ່ຈະໃຫ້ມີການເລີ້ມໃໝ່ສຳລັບຄົນຂອງພຣະອົງແລະພຣະສັນຍາຂອງພຣະອົງ ໂນອາແລະຄອບຄົວໃຊ້ຊີວິດຢູ່ໃນເຮືອດົນນານປານໃດ? ຖາມ:ທ່ານມີຄວາມຄິດຫລືຄຳຖາມແນວໃດເວລາເບິ່ງພຣະຄຳຕອນນີ້?
10. ພາທຸກຄົນໄປເບິ່ງ ປຖກ 8: 13-16, 20-22. ບອກນັກຮຽນໃຫ້ອ່ານພຣະຄຳສຳລັບຕົວເອງຢ່າງງຽບໆ ແລ້ວໃຫ້ຕອບຄຳຖາມຕໍ່ໄປນີ້:
    - ການເລີ້ມຕົ້ນໃໝ່ໃນຕອນນີ້ ມີສ່ວນຄ້າຍຄືກັບການສ້າງໂລກຂອງພຣະເຈົ້າຄັ້ງທຳອິດແນວໃດແດ່?
    - ທ່ານຄິດວ່າໂນອາແລະຄອບຄົວຮູ້ສຶກແນວໃດທີ່ໄດ້ອອກຈາກເຮືອ?
    - ການສ້າງແທ່ນບູຊາແລະການຖວາຍຂອງໂນອາມີຄວາມໝາຍແນວໃດ?
    - ພຣະເຈົ້າຊົງສັນຍາຫຍັງແດ່?
    - ພຣະເຈົ້າຊົງສັດຊື່ຕໍ່ພຣະສັນຍາຢ່າງໃດແດ່?
11. ທ່ານເຫັນພ້ອມກັບຄຳເວົ້າຕໍ່ໄປນີ້ບໍ່? "ພຣະເຈົ້າຊົງຊອກຫາໂອກາດທີ່ຈະນຳພາມະນຸດໃຫ້ເລີ້ມຊີວິດໃໝ່." ໃຫ້ໂອກາດບາງຄົນເພື່ອແບ່ງປັນປະສົບການສ່ວນຕົວ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

12. ເວົ້າວ່າ: ທຸກຄົນມີເຣື່ອງນ້ຳຖ້ວມຂອງຕົວເອງ. ບາງຄັ້ງແມ່ນຣາຄາແພງ, ບາງຄັ້ງເປັນໜ້າຢາກຫົວເລາະ ແລະເປັນໂຊກຮ້າຍ, ບ້າງຄັ້ງເປັນເຣື່ອງຮ້າຍແຮງ. ຖາມ: ນ້ຳຖ້ວມຝ່າຍຈິດວິນຍານຕອນໃດທີ່ພຣະເຈົ້າໄດ້ຊົງໃຫ້ໂອກາດທ່ານເລີ້ມຕົ້ນໃໝ່?

13. ໃຫ້ຜູ້ນຶ່ງອ່ານພາກ: "ຄວາມໝາຍແລະການປະຕິບັດ" ໃນບົດຮຽນ. ໃຊ້ເວລາສົນທະນາ: ພວກທ່ານສາມາດມີສ່ວນແນວໃດແດ່ສຳລັບການເລີ້ມຕົ້ນໃໝ່ທີ່ພຣະເຈົ້າຊົງສົ່ງມາໃນຊີວິດສ່ວນຕົວ ແລະໃນຄຣິສຕະຈັກຂອງທ່ານ?

14. ກ່ອນການອ້ອນວອນປິດ; ເວົ້າວ່າ: ພວກເຮົາບໍ່ຈຳເປັນທີ່ຈະຕ້ອງຕົກຢູ່ໃນວົງຈອນຂອງການພິພາກສາແລະການເລີ້ມຕົ້ນໃໝ່ສເມີໄປ. ພວກເຮົາຄວນຂອບພຣະຄຸນພຣະເຈົ້າທີ່ຊົງຊ່ວຍກູ້ເຮົາແລະໃຫ້ໂອກາດເລີ້ມຕົ້ນຊີວິດໃໝ່; ພວກເຮົາຄວນດຳເນີນຊີວິດດ້ວຍການເຊື່ອຟັງເໝືອນດັ່ງໂນອາ. ໃຫ້ແນະນຳວົງຈອນໃໝ່ດັ່ງນີ້:
    - ພຣະເຈົ້າຊົງພິພາກສາແລະນຳສູ່ການເລີ້ມໃໝ່
    - ການເລີ້ມໃໝ່ນຳໄປສູ່ຊີວິດທີ່ເຊື່ອຟັງ
    - ການເຊື່ອຟັງນຳໄປສູ່ການນະມັສການ
    - ການນະມັສການຕຽມພວກເຮົາໄປສູ່ການເຊື່ອຟັງຕໍ່ໆໄປ

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 10

# <u>ພຣະເຈົ້າຊົງເຮັດພັນທະສັນຍາ</u>

---

<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>: ປະຖົມມະການ 9 : 1-17

<u>ພູມຫລັງຂອງພຣະຄັມພີ</u>: ປະຖົມມະການ 9: 1-17

<u>ຈຸດສຳຄັນສຳລັບບົດຮຽນນີ້:</u> ພຣະເຈົ້າເລີ້ມພັນທະສັນຍາຊຶ່ງຈະໃຫ້ພຣະພອນແລະຄວາມສັມພັນຄືນດີ.

<u>ຄຳຖາມເພື່ອຄົ້ນຄວ້າ</u>: ພັນທະສັນຍາຄວາມສັມພັນກັບພຣະເຈົ້າໄດ້ມີຄວາມໝາຍຢ່າງໃດ?

<u>ຈຸດປະສົງຂອງການສຶກສານີ້:</u> ເພື່ອຈະປະເມີນເບິ່ງຄວາມໝາຍແລະຄວາມສຳຄັນຂອງພັນທະສັນຍາເຣື່ອງຄວາມສັມພັນກັບພຣະເຈົ້າ.

<u>ອ່ານລວບ</u>: ພຣະເຈົ້າໄດ້ຊົງເຮັດພັນທະສັນຍາກັບມະນຸດແລະທຸກສິ່ງທີ່ໄດ້ຊົງສ້າງອີກໃໝ່ ຫລັງຈາກໂນອາໄດ້ອອກຈາກເຮືອໃຫຍ່ແລະໄດ້ຖວາຍບູຊາແກ່ພຣະເຈົ້າ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຊັກຊວນນັກຮຽນໃຫ້ສົນທະນາວ່າມີເວລາໃດແດ່ທີ່ຄົນທົ່ວໄປຕ້ອງເຮັດສັນຍາກັນ. ຄຳຕອບອາດຈະແມ່ນ ການຊື້ບ້ານຫລືຣົດ, ການແຕ່ງງານ, ວຽກການ, ສົນທິສັນຍາ, ສັນຍາປ້ອງກັນ, ແລະສິ່ງອື່ນໆ. ຖາມ: ມີຫຍັງແດ່ທີ່ສາມາດສະແດງອອກເຖິງການຕົກລົງໃຫ້ຄຳສັນຍາກັນ? (ການຈັບມື, ການເກາະນິ້ວກ້ອຍ, ການໃຫ້ແຫວນ, ການສັນຍາປາກເປົ່າ ຫລືການບັນທຶກເປັນລາຍລັກອັກສອນ)
2. ເວົ້າວ່າ: ທຸກຄັ້ງທີ່ພວກເຮົາເຫັນຮຸ້ງກິນນ້ຳ, ພຣະເຈົ້າຊົງເຕືອນພວກເຮົາວ່າໂລກນີ້ມີພັນທະສັນຍາກັບພຣະອົງ. ຖາມ: ການມີພັນທະສັນຍາເຣື່ອງຄວາມສັມພັນກັບພຣະເຈົ້າມີຄວາມໝາຍຢ່າງໃດ?

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ໃຫ້ນັກຮຽນອ່ານ ປຖກ 9:1-17 ແຮງໆ. ແລ້ວເວົ້າວ່າ: ພຣະຄັມພີຕອນນີ້ມີຄຳຂວັນສຳລັບໂນອາແລະເຊື້ອສາຍຂອງລາວ. ໃຫ້ເວລາ 1-2 ນາທີ ເພື່ອສົນທະນາຫົວຂໍ້ຕໍ່ໄປນີ້:
   - ການງານຂອງມະນຸດຫລັງຈາກນ້ຳຖ້ວມໂລກ
   - ຄວາມສັມພັນລະຫວ່າງມະນຸດແລະສັດ
   - ແຜນການຂອງພຣະເຈົ້າເຣື່ອງອາຫານຂອງມະນຸດ
   - ຄຳສັ່ງສອນກ່ຽວກັບເລືອດ

- ມະນຸດຖືກສ້າງຂຶ້ນຕາມພຣະລັກສະນະຂອງພຣະເຈົ້າ

4. ພານັກຮຽນເບິ່ງ ປຖກ 9:8-11, ອ່ານແລະແນະນໍາວ່າຂໍ້ 8-11 ຊ່ວຍໃຫ້ພວກເຮົາເຂົ້າໃຈພັນທະສັນຍາຂອງພຣະເຈົ້າກັບໂນອາແລະຄອບຄົວຂອງລາວ. ສົນທະນາຄໍາຖາມຕໍ່ໄປນີ້:
   - ອັນນີ້ເປັນຄັ້ງແລກບໍທີ່ພວກເຮົາໄດ້ຍິນກ່ຽວກັບພັນທະສັນຍາ? ຖ້າວ່າ ບໍ່, ແມ່ນເວລາໃດ?
   - ພຣະເຈົ້າຊົງສັນຍາແນວໃດໃນພັນທະສັນຍານີ້?
   - ມັນມີຄວາມສໍາຄັນຢ່າງໃດສໍາລັບທຸກໆສິ່ງທີ່ມີຊີວິດ?
   - ມະນຸດມີຄວາມຮັບຜິດຊອບຢ່າງໃດໃນພັນທະສັນຍານີ້?
   - ເມື່ອພວກເຮົາເບິ່ງພັຍທັມມະຊາດ, ເຮົາຄິດຢ່າງໃດກ່ຽວກັບພຣະສັນຍາຂອງພຣະເຈົ້າ?
   - ພຣະເຈົ້າໄດ້ຊົງເສັຽສະລະແນວໃດແດ່ໃນການເຮັດພັນທະສັນຍາກັບໂນອາ?
5. ເວົ້າວ່າ: ຂໍ້ 12-17 ແມ່ນລາຍລະອຽດຂອງພັນທະສັນຍາ. ບັນລະຍາຍສັ້ນໆເຣື່ອງຮຸ້ງກິນນ້ໍາ ໃຊ້ຄໍາອະທິບາຍໃນບົດຮຽນ.
6. ພານັກຮຽນສົນທະນາຄໍາຖາມຕໍ່ໄປນີ້:
   - ພຣະຄໍາຕອນນີ້ມີຄວາມໝາຍແນວໃດໃນປະວັດຂອງພຣະເຈົ້າແລະໄພ່ພົນຂອງພຣະອົງ?
   - ທ່ານຄິດວ່າພຣະເຈົ້າຊົງຖືວ່າພັນທະສັນຍາຂອງພຣະອົງສໍາຄັນບໍ່? ເປັນຫຍັງ?
   - ເປັນຫຍັງພຣະເຈົ້າຈຶ່ງໃຫ້ສັນຍາແກ່ໂນອາແລະເຊື້ອສາຍຂອງລາວ?
   - ພຣະເຈົ້າຕ້ອງການຄໍາຕັກເຕືອນກ່ຽວກັບພັນທະສັນຍາຂອງພຣະອົງບໍ່?
   - ພຣະຄໍາຕອນນີ້ຊ່ວຍໃຫ້ພວກເຮົາໝັ້ນໃຈວ່າພຣະເຈົ້າຊົງສະຖິດຢູ່ດ້ວຍຢ່າງໃດ?

## <u>ນໍາພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ຖາມ: ທ່ານຄິດວ່າພັນທະສັນຍາພຣະເຈົ້າກັບມະນຸດກ້າວໜ້າບໍ່? ຂະນະທີ່ນັກຮຽນຕອບ, ໜູນໃຈກຸ່ມໃຫ້ພິຈາຣະນາເບິ່ງວ່າ ພຣະເຈົ້າບໍ່ພຽງແຕ່ໄດ້ທໍາພັນທະສັນຍາກັບໂນອາກ່ຽວກັບການຊົງສ້າງ, ແຕ່ພຣະອົງໄດ້ຊົງທໍາພັນທະສັນຍາກັບອັບຣາຮາມແລະເຊື້ອສາຍຂອງລາວ; ແລະພຣະເຈົ້າໄດ້ຊົງທໍາພັນທະສັນຍາກັບພວກເຮົາໂດຍການສິ້ນພຣະຊົນແລະການຄືນພຣະຊົນຂອງພຣະບຸດ.
8. ພານັກຮຽນຕອບ ຄໍາຖາມຂໍ້ 1 ແລະ ຂໍ້ 3 ໃນບົດຮຽນ. ຊັກຊວນໃຫ້ແບ່ງປັນຄໍາຕອບແຮງໆ.
9. ໃຫ້ທຸກຄົນພິຈາຣະນາຄໍາຖາມສຸດທ້າຍໃນບົດຮຽນ ກ່ອນອະທິຖານປິດ; ພິຈາຣະນາວ່າຊີວິດຂ້ອຍຈະປ່ຽນແປງແນວໃດໃນອາທິດນີ້ ເພາະພຣະເຈົ້າໄດ້ທໍາພັນທະສັນຍາກັບຂ້ອຍແລ້ວ?

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 11

# <u>ບິດາຂອງຄົນທັງປວງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ປະຖົມມະການ 10

**<u>ພູມຫລັງຂອງພຣະຄັມພີ:</u>** ປະຖົມມະການ 10

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ບອກໃຫ້ຮູ້ວ່າທຸກຊາດເກີດມາຈາກຄອບຄົວດຽວຫລັງນ້ຳຖ້ວມ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເປັນຫຍັງປະຖົມມະການ 10 ຈຶ່ງບັນທຶກເຊື້ອສາຍລາຍລ່ອງ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອເຮົາຈະໄດ້ຮູ້ວ່າເຮົາມີເຊື້ອສາຍມາຈາກ ປະຖົມມະການ 10.

## <u>ບົດນຳ</u>

ເຣື່ອງລູກຊາຍຂອງໂນອາສາມຄົນໄດ້ເກີດຫລັງຈາກນ້ຳຖ້ວມໂລກແລ້ວນັ້ນເປັນດັ່ງນີ້;

1. ລູກຊາຍກົກຂອງໂນອາມີຊື່ວ່າ ແຊມ (Shem). ເປັນບັນພະບຸຣຸດຂອງຄົນພາກຕາເວັກອອກ.
2. ຜູ້ທີສອງມີຊື່ວ່າ ຮາມ (Ham). ເປັນບັນພະບຸຣຸດຂອງຄົນທົ່ວທະວີບອັຟຣິກາ.
3. ຜູ້ທີສາມມີຊື່ວ່າ ຢາເຟດ (Japheth). ເປັນບັນພະບຸຣຸດຂອງຄົນຢູໂຣບ, ພາກເໜືອເອເຊັຽ (ກຣີກ). ທັງສາມອ້າຍນ້ອງເປັນຜູ້ສືບເຊື້ອສາຍມາຈາກໂນອາຜູ້ດຽວ ຫລືຄອບຄົວດຽວ, ຕໍ່ມາເມື່ອນັບເບິ່ງເຊື້ອສາຍພວກລູກຂອງສາມອ້າຍນ້ອງນັ້ນແລ້ວເຫັນວ່າມີ 70 ຄົນ ແລ້ວຈຶ່ງເພີ່ມຂຍາຍແຕກໜໍ່ກັນອອກໄປເປັນເຊື້ອຊາດຕ່າງໆໃນໂລກເທົ່າທຸກວັນນີ້. ດັ່ງນັ້ນຈຶ່ງເວົ້າໄດ້ວ່າ ຄົນທັງໂລກມີພໍ່ຜູ້ດຽວກັນຄື ໂນອາ.

## <u>ລູກຊາຍຂອງ ຢາເຟດ</u> (Japheth) ປະຖົມມະການ 10:1-5

1. ຂຽນຊື່ສາມອ້າຍນ້ອງລູກຊາຍຂອງໂນອາໃສ່ກະດານ.
    1. ອ້າຍກົກມີຊື່ວ່າ ຢາເຟດ (Japheth). ເປັນບັນພະບຸຣຸດຄົນຢູໂຣບ, ພາກເໜືອເອເຊັຽ (ກຣີກ).
    2. ຜູ້ກາງມີຊື່ວ່າ ຮາມ (Ham). ເປັນບັນພະບຸຣຸດຂອງຄົນທົ່ວທະວີບອັຟຣິກາ, ເອຢິບ, ອາຣາເບັຽ, ການາອານ
    3. ຜູ້ນ້ອຍມີຊື່ວ່າ ແຊມ (Shem). ເປັນບັນພະບຸຣຸດຂອງຄົນພາກຕາເວັນອອກຄືຊົນຊາດຢິວ.
2. ສັງເກດວ່າທັງສາມອ້າຍນ້ອງເປັນຄົນເຂັ້ມແຂງ ຈົນກາຍເປັນຜູ້ນຳແຕ່ລະເຂດທີ່ກ່າວຂ້າງເທິງ.
3. ສົນທະນາກັນວ່າ ໂນອາລ້ຽງລູກເປັນຄົນແນວໃດ? ເພິ່ນສອນລູກແນວໃດ ຈົນລູກກາຍເປັນຜູ້ນຳທຸກຄົນ? ເຮົາຈະຮຽນເອົາແບບຢ່າງຂອງໂນອາແນວໃດໃນການລ້ຽງລູກຂອງເຮົາ?

## <u>ລູກຊາຍຂອງຮາມ</u> (Ham) ປະຖົມມະການ 10:6-20

1. ຮາມເປັນລູກຊາຍຜູ້ທີ່ສອງຂອງໂນອາ, ລາວໄດ້ເປັນບັນພະບຸຣຸດຂອງຄົນທົ່ວທະວີບອັຟຣິກາ, ເອຢິບ, ອາຣາເບັຽ, ການາອານ ອັນນັບວ່າເປັນແຜ່ນດິນທີ່ກວ້າງໃຫຍ່ໄພສານ ແຕ່ກໍມີຄຳສາບແຊ່ງໃນນັ້ນດ້ວຍ. ເຣື່ອງເນື່ອງມາຈາກປະຖົມມການ 9 ມີຢູ່ວ່າ; ຫລັງຈາກນ້ຳຖ້ວມແລ້ວພຣະເຈົ້າໄດ້ອວຍພອນໂນອາພ້ອມດ້ວຍລູກທັງສາມໃຫ້ມີລູກເຕົ້າມາກມາຍທະວີຂຶ້ນທົ່ວໂລກ (9:1). ແລ້ວຕໍ່ມາໂນອາກໍເລີ້ມຕົ້ນເຮັດສວນເພື່ອປູກຝັງພືດພັນໄວ້ກິນ, ໃນນັ້ນໂນອາໄດ້ປູກຕົ້ນອະງຸ່ນ ເມື່ອເກີດຜົນແລ້ວເພິ່ນກໍເຫັນວ່ານ້ຳອະງຸ່ນໜ້າດື່ມກິນແລະແຊບຫລາຍ ເມື່ອນັ້ນເພິ່ນໄດ້ເມົານ້ຳອະງຸ່ນຈົນມຶນເມົາ ຈົນເຖິງຂັ້ນແກ້ເສື້ອຜ້າຂອງຕົນອອກແລະນອນເປືອຍກາຍຢູ່. ພຣະຄັມພີບໍ່ໄດ້ບອກວ່າ ເພິ່ນຕັ້ງໃຈດື່ມເຫລົ້າ ຫລືດື່ມນ້ຳອະງຸ່ນໂດຍບໍ່ຮູ້ວ່າຈະເມົາຄືເຫລົ້າແຕ່ເພິ່ນກໍເມົາໄປແລ້ວ. ຮາມລູກຊາຍໄດ້ເຫັນພໍ່ເປືອຍກາຍກ່ອນອ້າຍແລະນ້ອງຂອງຕົນ ຈຶ່ງໄປບອກເຣື່ອງນີ້ແກ່ພວກອ້າຍ ແລະນ້ອງ ແລ້ວທັງສາມອ້າຍນ້ອງກໍພະຍາຍາມເຮັດການດີ (ອ່ານ 20-24). ສ່ວນໂນອາບໍ່ຮູ້ວ່າເພິ່ນຄິດແນວໃດຈຶ່ງປ້ອຍດ່າ, ແຕ່ເຮົາພໍຈະເຂົ້າໃຈວ່າ ຮາມບໍ່ໄດ້ປົກປິດພໍ່ໄວ້ ແຕ່ໄປບອກພວກອ້າຍນ້ອງຂອງລາວກໍເທົ່າກັບວ່າລາວເປີດໂປງພໍ່ ດັ່ງນັ້ນໂນອາຜູ້ເປັນພໍ່ອາດຈະຄິດວ່າລູກຊາຍຮາມ ບໍ່ໃຫ້ກຽດພໍ່ ຮາມຖານະເປັນຕົ້ນຕະກຸນຂອງຄົນແຜ່ນດິນການາອານທີ່ຖືກປ້ອຍດ່າ. (ອ່ານຄຳສາບແຊ່ງຂອງໂນອາຂໍ້ 25-27).

2. ກ. ໃນການເສີມຂຍາຍດິນແດນນັ້ນເຮັດໃຫ້ມີພາສາ, ສັງຄົມ, ວັທນະທັມໃໝ່ເກີດຂຶ້ນ ແລະຄວາມບໍ່ເຊື່ອຟັງກໍເກີດຂຶ້ນເຊັ່ນດຽວກັນ, ແຕ່ຫລານຊາຍຂອງຮາມຜູ້ເກັ່ງກ້າຜູ້ນຶ່ງກໍສາສມາດເຮັດໃຫ້ພວກເຂົາຍອມເຊື່ອຟັງແລະປົກຄອງພວກເຂົາ, ລາວມີຊື່ວ່າ ນິມໂຣດ

ຂ. ລູກຊາຍຜູ້ນຶ່ງຂອງຮາມທີ່ຊື່ວ່າກູເຊ ມີລູກຊາຍຊື່ ນິມໂຣດ ເປັນນັກຕໍ່ສູ້ຈົນເລື່ອນຊັ້ນຂຶ້ນມາເປັນຜູ້ປົກຄອງຜູ້ຍິ່ງໃຫຍ່ຢ່າງບໍ່ເຄີຍມີມາກ່ອນ (ຂໍ້ 8-9). ນອກຈາກການປົກຄອງແລ້ວລາວຍັງເປັນນາຍພານທີ່ມີຊື່ສຽງໄປທົ່ວໂລກໃນການລ່າເນື້ອ ຂອງລາວ, ດ້ວຍເຫດນີ້ພວກນາຍພານສມັຍນີ້ ເມື່ອລ່າເນື້ອໄດ້ແລ້ວຈຶ່ງມັກເວົ້າເຢີ້ຍກັນວ່າ ເກັ່ງປານນິມໂຣດເນາະ!.

## <u>ລູກຊາຍຂອງແຊມ</u> (Shem) ປະຖົມມະການ 10:21-33

1. ແຊມ, ແມ່ນລູກກົກຂອງໂນອາ. ແຊມເປັນບັນພະບຸຣຸດຂອງອິສຣະເອນ ລາວມີອາຍຸຍືນຍາວເຖິງ 600 ປີ ຕອນເພິ່ນມີອາຍຸ 100 ປີ ນັ້ນກໍຍັງມີລູກນ້ອຍເກີດໃໝ່ຢູ່ ແລະອີກ 500 ປີ ຕໍ່ມາເພິ່ນກໍໄດ້ລູກນ້ອຍອີກຕັ້ງຫລາຍຄົນ (ປະຖົມການ 11:10-11).

2. ແຊມ ເປັນບັນພະບຸຣຸດຂອງ ອີເບີ ບ່ອນເປັນທີ່ມາຂອງອັບຣາຮາມຕາມພາຍຫລັງໃນ (11:20-26; 15). ແລະແຊມກໍເປັນບັນພະບຸຣຸດທີ່ເພີ້ມຂຍາຍຄອບຄົວແລະແຜ່ນດິນໄປອີກກວ້າງໄກ.

3. ການເພີ້ມຂຍາຍຄອບຄົວນີ້ມີທັງດີແລະບໍ່ດີເຊັ່ນ;

1. ທາງດີ ແມ່ນພວກລູກຫລານພາກັນຂຍາຍແຜ່ນດິນອອກໄປຈົນທົ່ວແຜ່ນດິນອັນກວ້າງໃຫຍ່ໄພສານເພື່ອສ້າງຖິ່ນຖານບ້ານຊ່ອງໃຫ້ກວ້າງຂວາງເພື່ອອະນາຄົດອັນກວ້າງໄກ.

2. ທາງບໍ່ດີ ພວກລູກຫລານພາກັນແບ່ງແຍກ, ແຕກແຍກ ເມື່ອເປັນເຊັ່ນນັ້ນ ຈຶ່ງເກີດມີການແບ່ງແຍກສັງຄົມ, ແບ່ງແຍກວັທນະທັມ ຄືຄົນອີກກຸ່ມນຶ່ງບໍ່ສາມາດຮັບຮູ້ສັງຄົມອີກກຸ່ມນຶ່ງ ແລະໃນທີ່ສຸດພວກເຂົາກໍເວົ້າບໍ່ເຂົ້າໃຈກັນ ຈຶ່ງເປັນຕົ້ນເຫດໃຫ້ມີພາສາຕ່າງຊາດເກີດຂຶ້ນດັ່ງທີ່ເຫັນໃນໂລກວັນນີ້.

*ທວ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 12

# <u>ພຣະເຈົ້າບໍ່ໃຫ້ສ້າງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ປະຖົມມະການ 11:1-9

**<u>ພູມຫລັງຂອງພຣະຄັມພີ:</u>** ປະຖົມມະການ 11:1-9

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຊົງໂຕ້ຕອບເຂົາທີ່ຈົມຢູ່ໃນຄວາມເຊື່ອພຣະປອມ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເປັນຫຍັງຄົນເຮົາຈຶ່ງມັກສ້າງຮູບໂຄຣົບ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອໃຫ້ປະລະພຣະທີ່ສ້າງດ້ວຍມືມະນຸດ.

## <u>ບົດນຳ.</u>

ພຣະເຈົ້າແລະມະນຸດຄິດບໍ່ຄືກັນ, ແຜນການພຣະເຈົ້າເປັນຢ່າງນຶ່ງ ແລະແຜນການຂອງມະນຸດກໍເປັນອີກຢ່າງນຶ່ງດັ່ງໃນບົດຮຽນວັນນີ້. ມະນຸດຢາກສ້າງຫໍບາເບນ ເພື່ອເຫດຜົນສອງປະການ ແລະພຣະເຈົ້າບໍ່ເຫັນດີເພາະວ່າໂລກຈະບໍ່ຈະເຣີນ.

**<u>ແຜນການຂອງມະນຸດ</u>** (ປະຖົມມະການ 11:1-4)

1. **ປະຖົມມະການ 7:13-16** ກ່າວເຖິງ ໃນສມັຍນ້ຳຖ້ວມ. ມີພຽງຄອບຄົວດຽວທີ່ລອດພົ້ນ ແຕ່ໂລກຂອງພຣະເຈົ້າຍັງກວ້າງໃຫຍ່ມະຫາສານ.

2. **ປະຖົມມະການ 9:2-4** ພຣະເຈົ້າຊົງອວຍພອນວ່າ “*ໃຫ້ພວກເຈົ້າມີລູກເຕົ້າມາກທະວີຂຶ້ນທົ່ວໂລກເທີ້ນ ສັດທຸກໆຊະນິດໃນໂລກຄື ສັດລາກ ສັດເລືອຄານ ສັດໃຫຍ່ ສັດນ້ອຍນົກຫນູ ແລະປູປານາໆຊນິດ ຈະຢ້ານກົວ ແລະຢູ່ໃຕ້ອຳນາດຂອງເຈົ້າແຕ່ບັດນີ້ໄປສັດທຸກໆຊະນິດ ແລະພືດທຸກໆຢ່າງ ພວກເຈົ້າກິນໄດ້ເພາະເຮົາໄດ້ປະທານສິ່ງນັ້ນໃຫ້ເປັນອາຫານແກ່ພວກເຈົ້າແຕ່ມີສິ່ງທີ່ເຈົ້າບໍ່ຄວນກິນຄື ເລືອດຊຶ່ງເປັນຫລັກສຳຄັນຂອງຊີວິດ* " . ແປວ່າຢາກໃຫ້ເຊື້ອສາຍຂອງໂນອາແຜ່ອອກໄປຈົນເຕັມໂລກ.

3. **ປະຖົມມະການ 11: 3-4** ພົລເມືອງເພີ້ມຂຶ້ນຕາມຄຳອວຍພອນຂອງພຣະເຈົ້າ, ລູກຫລານຂອງໂນອາທີ່ໄດ້ແຜ່ກ້ວາງອອກໄປເລື້ອຍໆ ຈົນບໍ່ຮູ້ວ່າບັນດາພວກລູກຫລານໄປຢູ່ໃສກັນແລະເມື່ອມາຊອກຫາກັນກໍບໍ່ພົ້ກັນອີກແລ້ວ. ດ້ວຍເຫດນີ້ເຂົາຈຶ່ງຊອກຫາວິທີແກ້ໄຂເພື່ອບໍ່ໃຫ້ພັດພາກຈາກກັນອີກຕໍ່ໄປ ແລະກໍຍັງເປັນການດີທີ່ພຣະເຈົ້າຈະສະເດັດລົງມາຈາກເບື້ອງເທິງແລ້ວທຸກຄົນກໍຈະໄດ້ນະມັສການພຣະອົງ ນີ້ເປັນຄວາມຄິດອັນທີສອງທີ່ເຂົາຕັ້ງໃຈຈະເຮັດຫໍຄອຍນີ້, ແລ້ວເຂົາຈຶ່ງຕົກລົງກັນດັ່ງນີ້;

<u>**ພຣະເຈົ້າຕ້ານແຜນຂອງເຂົາ**</u> **(ປະຖົມມະການ 11:5-9).**

1. **ປະຖົມມະການ 11**: **6-8** ຄວາມຄິດຂອງມະນຸດຂັດກັນກັບແຜນການຂອງພຣະເຈົ້າ, ພຣະເຈົ້າຢາກໃຫ້ມະນຸດແຜ່ຂະຫຍາຍອອກໄປທົ່ວມຸມໂລກ ແຕ່ຝ່າຍມະນຸດບໍ່ຢາກຫ່າງໄກກັນ ເພາະຢ້ານຫລົງທາງກັບຄືນມາຫາກັນ.

2. ຄຳວ່າ (ເຮົາ ໃນຂໍ້ 7) " *ເຮົາຕ້ອງລົງໄປ* " ມີຄວາມໝາຍວ່າ ອົງພຣະຜູ້ເປັນເຈົ້າຮ່ວມກັບຝູງເທວະດາຂອງພຣະອົງສະເດັດລົງຈາກສວັນໄປຍັງໂລກມະນຸດ.

3. ພຣະເຈົ້າສະເດັດລົງມາດ້ວຍຣິດເດດ ບໍ່ແມ່ນສະເດັດລົງມາຕາມຫໍຄອຍທີ່ເຂົາສ້າງໃຫ້ພຣະອົງລົງມາດ້ວຍເຫດນີ້ຫໍບາເບນນອກຈາກບໍ່ມີຄວາມໝາຍຕໍ່ພຣະອົງແລ້ວຍັງເປັນການຂັດຕໍ່ແຜນການພຣະອົງ, ເມື່ອຂັດຕໍ່ແຜນການພຣະອົງໆກໍຕ້ອງເຮັດໃຫ້ສິ່ງເຫລົ່ານັ້ນສລາຍໄປຄື; " *ໃຫ້ພວກເຂົາພັດພາກຈາກກັນໄປຢູ່ທົ່ວທຸກແຫ່ງໃນໂລກ ພວກເຂົາຈຶ່ງເຊົາສ້າງເມືອງນັ້ນ* " ( ຂໍ້ 8).

4. ເພື່ອເຮົາຈະໄດ້ເຂົ້າໃຈນ້ຳພຣະທັຍພຣະເຈົ້າໃຫ້ຄຣູເລົ່າເຣື່ອງພຣະເຈົ້າແລະອັບຣາມສົນທະນາກັນໃນປະຖົມມະການ 15:1-3.

5. ບອກນັກຮຽນວ່າ ພຣະເຈົ້າຊົງສ້າງໂລກອັນກວ້າງໃຫຍ່ເພື່ອລູກຂອງພຣະອົງຈະໄປຢູ່, ດັ່ງນັ້ນນ້ຳພຣະທັຍຂອງພຣະເຈົ້າແມ່ນໃຫ້ລູກຂອງພຣະອົງອອກໄປຢູ່ທຸກບ່ອນທຸກທີ່ ບໍ່ແມ່ນຈະມາຢູ່ຢ່າງອຶດອັດທີ່ຫໍບາເບນ.

6. ໂອ້ລົມກັບນັກຮຽນເຣື່ອງເຮືອນຫລັງໃຫຍ່ທີ່ເຮົາມີຢູ່ ແມ່ນເພື່ອອັນໃດ? ຫາກບໍ່ມີລູກຢູ່ນຳເຮົາຍັງຢາກໄດ້ເຮືອນຫລັງໃຫຍ່ຢູ່ບໍ່? ຫາກເຮົາໄປຢູ່ກັບພຣະເຈົ້າແລ້ວເຮືອນເຮົາຈະໃຫ້ໃຜ? ການໂອ້ລົມນີ້ຈະຊັກຊວນນັກຮຽນເຂົ້າໃຈແຜນການຂອງພຣະເຈົ້າເພີ້ມອີກ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# <u>ເລືອກບ່ອນຢູ່ໃຫ້ລູກຂອງພຣະອົງ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ປະຖົມມະການ 11:10-32

**<u>ພູມຫລັງຂອງພຣະຄັມພີ:</u>** ປະຖົມມະການ 11:10-32

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ທຸກຢ່າງເປັນໄປຕາມນ້ຳພຣະທັຍພຣະເຈົ້າຜູ້ຊົງຣິດ

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະຮູ້ວ່າພຣະເຈົ້າຊົງເຮັດໄດ້ທຸກຢ່າງແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອບອກໃຫ້ຮູ້ວ່າພຣະເຈົ້ານັ້ນຊົງຣິດໃນອະດີດແລະໃນຊີວິດເຮົາ.

## <u>ບົດນຳ</u>

ບົດຮຽນຊຸດນີ້ສ່ວນຫລາຍຈະມີແຕ່ສອງຫົວຂໍ້ ເພາະວ່າສ່ວນຫລາຍຈະເວົ້າເຖິງເຣື່ອງເຊື້ອສາຍຄອບຄົວ ເລີ້ມຈາກໂນອາ ແລ້ວຂຍາຍຂຶ້ນຢ່າງໃຫຍ່ຫລວງ ແລະກໍແລ້ວໜ້ອຍລົງມາຈົນມາຮອດສມັຍພຣະເຈົ້າຊົງເອີ້ນອັບຣາຮາມໃຫ້ອອກໄປຈາກບ້ານເຮືອນພໍ່ຂອງເພິ່ນ ທັງນີ້ກໍເພາະວ່າພຣະເຈົ້າມີແຜນການສຳລັບຊີວິດເພິ່ນ.

ໃຫ້ຄຣູສອນເລົ່າເຣື່ອງຂອງນາງ ເອມີ ຄາມີໂກ ໃນບົດຮຽນ ແລ້ວສລຸບບອກນັກຮຽນດັ່ງນີ້;

1. ຄວາມຮັ່ງມີ ແລະຄວາມທຸກຍາກ ບາງເທື່ອກໍມີການປ່ຽນແປງ ດັ່ງນາງ ເອມີ ຄາມີໂກ ກາຍເປັນເປັນຄົນທຸກຈົນເມື່ອພໍ່ລາວຕາຍ.
2. ການທີ່ພຣະເຈົ້າຊົງເອີ້ນນັ້ນ ພຣະອົງບໍ່ຊົງເລືອກຖານະສັກສີ ພຣະເຈົ້າຊົງໃຊ້ລາວຕອນລາວເປັນຄົນຍາກຈົນ ແລະລາວກໍນຳພາຄົນເຊື່ອພຣະເຈົ້າເປັນພື້ນໆຄົນທີ່ປະເທດອິນເດັຽ.
3. ໃນບົດຮຽນຕໍ່ໄປເຮົາຈະເຫັນພຣະເຈົ້າຊົງເອີ້ນເອົາອັບຣາຮາມອອກຈາກບ້ານພໍ່ທີ່ອຸດົມສົມບູນໄປ ດ້ວຍເຂົ້າປາອາຫານໄປຍັງບ່ອນທີ່ເພິ່ນບໍ່ເຄີຍຮູ້ມາກ່ອນ, ເມື່ອເພິ່ນໄປຕາມທີ່ພຣະເຈົ້າຊົງບອກແລ້ວພຣະເຈົ້າກໍຊົງອວຍພຣະພອນເພິ່ນ.

**<u>ເຊື້ອສາຍຂອງແຊມ</u>** (ປະຖົມມະການ 11:10-26)

ຫລັງຈາກນ້ຳຖ້ວມນັ້ນແຊມມີອາຍຸ 100 ປີ ເພິ່ນໄດ້ລູກຊາຍອີກຜູ້ນຶ່ງທີ່ມີຊື່ວ່າອາກປັກສາດ (Arpachshad) ແລະຈາກນັ້ນ ຊ່ວງລະຍະອີກ 500 ປີ ທີ່ແຊມຍັງມີຊີວິດຢູ່ເພິ່ນກໍມີລູກຍິງແລະລູກຊາຍອີກຫລາຍຄົນ (ຂໍ້ 10-11). ແລະຊື່ຂອງອາກປັກສາດໄດ້ປາກົດໃນພຣະທັມລູກາ 3:36 ອີກເທື່ອນຶ່ງ ແຕ່ການສະກົດຕ່າງກັນໜ້ອຍນຶ່ງ ເພາະວ່າການອອກສຽງຂອງຄົນລາວແຕ່ລະພາກຕ່າງກັນໄປແດ່. ອາກປັກສາດ ເປັນລູກຜູ້ທີສາມຂອງແຊມ ແລະລາວກາຍເປັນບັນພະບຸຣຸດຂອງຄົນເຮັບເຣີ.

ເນື່ອງຈາກວ່າເຊື້ອສາຍຂອງແຊມສິບຊົ່ວຄົນຈຶ່ງເປັນການຍາກທີ່ຈະເຂົ້າໃຈ ດັ່ງນັ້ນຈຶ່ງຂໍເລັ່ງໄປໃສ່ເຣື່ອງຂອງອັບຣາຮາມດັ່ງນີ້; " *ເມື່ອນາໂຮ ມີອາຍຸໄດ້ຊາວເກົ້າປີກໍມີບຸດຊາຍຊື່ ເຕຣາ ຕັ້ງແຕ່ໄດ້ເຕຣາມາ ກໍມີຊີວິດຕໍ່ມາອີກຮ້ອຍສິບເກົ້າປີ ແລະມີບຸດຊາຍຍິງຕື່ມອີກຫລາຍຄົນເມື່ອເຕຣາມີອາຍຸໄດ້ເຈັດສິບປີ ກໍມີບຸດຊາຍສາມຄົນແລ້ວຄື ອັບຣາມ ນາໂຮຣ໌ ແລະຮາຣານ* " (ຂໍ້ 24-26). ມາບັດນີ້ເຮົາຮູ້ແລ້ວວ່າ ອັບຣາມ ຫລື ອັບຣາຮາມ ເພາະວ່າເມື່ອເລີ້ມແລກເພິ່ນຊື່ ອັບຣາມ ແລະຕໍ່ມາປ່ຽນເປັນ ອັບຣາຮາມ (ເບິ່ງ ປະຖົມມະການ 17:5). ອັບຣາຮາມແມ່ນລູກຊາຍຂອງເຕຣາ. ນັບຈາກແຊມຈົນມາເຖິງອັບຣາຮາມເປັນເວລານານເຖິງສິບຊົ່ວຄົນ ພຣະເຈົ້າຈຶ່ງຮ້ອງໃຊ້ອັບຣາຮາມ.

## <u>ເຊື້ອສາຍຂອງເຕຣາ</u> (ປະຖົມມະການ 11: 27-32).

ເຕຣາຜູ້ເປັນພໍ່ຂອງອັບຣາຮາມ ໃນເມື່ອເພິ່ນມີອາຍຸ 70 ປີ ເພິ່ນໄດ້ລູກຊາຍສາມຄົນຕໍ່ໆກັນມາ. " *ເມື່ອເຕຣາມີອາຍຸໄດ້ເຈັດສິບປີ ກໍມີບຸດຊາຍສາມຄົນແລ້ວຄື ອັບຣາມ ນາໂຮ ແລະຮາຣານ* " (ຂໍ້ 26). ເຕຣາມີພູມລຳເນົາທີ່ ເມືອງ ອູເຣ (Ur) ເມືອງນີ້ເປັນບ້ານເກີດຂອງອັບຣາຮາມ.

ໃນພຣະຄັມພີໄດ້ກ່າວເຖິງເມືອງ ອູເຣ ພຽງແຕ່ 4 ເທື່ອເຊັ່ນໃນ ປະຖົມມະການ 11:28, 31; 15:1 ແລະ ໃນເນເຫມີຢາ 9:7. ເມືອງອູເຣໃນສັຍນີ້ມີຊື່ໃໝ່ວ່າ ພູບິດຕູເມັນ (The Mound of Bitumen) ຊຶ່ງເປັນທີ່ຄົ້ນຄວ້າອັນໃຫຍ່ຂອງນັກວິທະຍາສາດ ເຣື່ອງຂອງມະນຸດໃນຄາວກ່ອນ (Archeologies) .

ເນື່ອງຈາກຄວາມຂາດແຄນ ເຕຣາໄດ້ພາພວກລູກຊາຍແລະລູກໃພ້ຍ້າຍໄປຢູ່ ການາອານ ເພາະເປັນແຜ່ນດິນທີ່ອຸດົມສົມບູນ, ແລະແຜ່ນດິນການາອານນີ້ເອງເຮົາໄດ້ໃນສມັຍອົບພະຍົບໜີຈາກເອຢິບນັ້ນຊົນຊາດອິສຣາເອນໄດ້ວົນວຽນໄປມາເປັນເວລາ 40 ປີ (ອົບພະຍົບ 16:35) ແຕ່ເຂົ້າໄປບໍ່ໄດ້. ແລະຕົກມາໃນພຣະທັມຈົດບັນຊີອິສຣາເອນກໍສົ່ງພວກນັກສືບລັກເຂົ້າໄປແຜ່ນດິນການາອານແລະເຫັນວ່າເປັນແຜ່ນດິນທີ່ອຸດົມສົມບູນ (ອ່ານຈົດບັນຊີ 13:27).

ເຕຣາພາພວກລູກໄປຮອດເມືອງຮາຣານ ຍັງບໍ່ທັນເຖິງ ການາອານ ເພິ່ນກໍເສັຽຊີວິດກ່ອນ ອ່ານ ປະຖົມມະການ 11:31-32. ແຕ່ເພິ່ນກໍດົ້ນຮົນນຳພາພວກລູກໄປຍັງແຜ່ນດິນອຸດົມສົມບູນ ຊຶ່ງພວກເຮົາທັງຫລາຍຄວນຮຽນເອົາແບບຢ່າງ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນອິສເຕີ
# ອຸ່ນໃຈເມື່ອໄດ້ຟັງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ລູກາ 24: 1-6, 13-35

**ພູມຫລັງຂອງພຣະຄັມພີ:** ລູກາ 24

**ຈຸດສຳຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າພຣະເຢຊູອະທິບາຍພຣະທັມໃຫ້ສາວົກສອງຄົນຟັງ.

**ຄຳຖາມເພື່ອການຄົ້ນຄວ້າ:** ການຟື້ນພຣະຊົນມີຄວາມສຳຄັນອັນໃດຕໍ່ພວກເຮົາ?

**ຈຸດປະສົງຂອງບົດຮຽນ:** ເພື່ອບອກໃຫ້ຮູ້ວ່າການຟື້ນພຣະຊົນຊ່ວຍໃຫ້ເຮົາເຂົ້າໃຈຄຳສອນຂອງພຣະອົງຫລາຍຂຶ້ນ.

## ບົດນຳ

ອິສເຕີ ເປັນວັນສຳຄັນວັນນຶ່ງຂອງຄຣິສຕຽນ ເພາະເປັນວັນຄືນພຣະຊົນ ຄືນມາຈາກຂອງພຣະເຢຊູ ກໍເພື່ອພິສູດໃຫ້ຮູ້ວ່າພຣະເຢຊູຊົງເປັນພຣະເຈົ້າອົງດຽວ, ເປັນພຣະເຈົ້າເໜືອຄວາມຕາຍ ດ້ວຍເຫດນີ້ຄຣິສຕຽນຜູ້ທີ່ບໍ່ມາໂບດເປັນປະຈຳກໍຈະມາໃນວັນສຳຄັນນີ້.

**ຄຳສອນພຣະເຢຊູເປັນຈິງ** (ລູກາ 24:1-6ກ).

1. ພຣະເຢຊູໄດ້ສັ່ງສອນ, ບອກເລົ່າຫລາຍສິ່ງຫລາຍຢ່າງ ໃຫ້ພວກສາວົກແລະປະຊົນໄດ້ຮູ້ແລະໄດ້ຟັງ ຮວມທັງຊົງບອກໄວ້ວ່າໃນວັນຖ້ວນສາມພຣະອົງຈະຄືນພຣະຊົນມາຈາກຄວາມຕາຍໃນ ມັດທາຍ 1:21; 17:23; 20:19 ເຖິງປານນັ້ນກໍບໍ່ມີໃຜເຊື່ອແລະເຂົ້າໃຈຢ່າງຄັກແນ່. ເມື່ອເປັນເຊັ່ນນັ້ນການສິ້ນພຣະຊົນຂອງພຣະອົງຈຶ່ງເປັນທີ່ໂສກເສົ້າ ແລະນຳຄວາມຢ້ານມາສູ່ພວກສາວົກ ແລະການຄືນພຣະຊົນຈຶ່ງເປັນສິ່ງກະຕຸ້ນຈິດໃຈສາວົກໃຫ້ເຂົ້າໃຈວ່າຄຳສອນຂອງພຣະອົງນັ້ນເປັນຈິງທຸກປະການ.

2. ເວົ້າເຣື່ອງວັນສະບາໂຕ. ວັນສະບາໂຕ (ວັນເສົາ) ແມ່ນຊາດຢິວຮັກສາກົດມາແຕ່ໃດໆ (ເບິ່ງພຣະທັມ ອົບພະຍົບ 31:12-18) ແມ່ນໃຫ້ຄົນແລະສັດພັກຜ່ອນ ຫລືເປັນວັນທີ່ທຸກຄົນຄວນອຸທິດຕົນເອງໃນການນະມັສການພຣະເຈົ້າ. ວັນສະບາໂຕຈະເລີ້ມຕົ້ນຈາກຕາເວັນຕົກໃນແລງວັນສຸກຈົນເຖິງຕາເວັນຕົກຂອງແລງວັນເສົາ.

3. ຄຳວ່າວັນຕົ້ນສັປດາ ແປວ່າວັນອາທິດຕອນເຊົ້າ ແລະເປັນວັນຖ້ວນສາມທີ່ພຣະສົບພຣະເຢຊູຖືກບັນຈຸໄວ້ໃນອຸບໂມງ. ແປວ່າພວກແມ່ຍິງໄປຍັງອຸບໂມງໃນເຊົ້າມືດຂອງວັນອາທິດ.

4. ກ. ເມື່ອພົ້ນຈາກບັນຫາວັນສະບາໂຕແລ້ວ ພວກແມ່ຍິງພາກັນໄປອຸບໂມງແຕ່ເຊົ້າມືດຂອງວັນອາທິດ, ພາຍໃນໃຈເຂົາເຫັນບັນຫາໃຫຍ່ຄືກ້ອນຫີນອັດປາກຖ້ຳ ເຂົາຄຶດວ່າເຮັດແນວໃດຈຶ່ງຈະເຂົ້າໄປຫາພຣະ

ເຢຊູໄດ້. ບອກນັກຮຽນວ່າສຳລັບຄົນທີ່ບໍ່ຮູ້ຈັກກັບພຣະເຢຊູຢາກເຂົ້າຫາພຣະເຢຊູເພື່ອຮັບເອົາຄວາມລອດພົ້ນນັ້ນກໍພົບບັນຫາ ຫລືມີສິ່ງກີດຂວາງແນວນີ້ແຫລະ.

໒. ບອກນັກຮຽນວ່າ, ຄຣິສຕຽນເຫັນວ່າບັນຫາໃນຊີວິດນັ້ນຍິ່ງໃຫຍ່ທີ່ບໍ່ສາມາດແກ້ໄຂໄດ້ ແຕ່ເຮົາລືມໄປວ່າຫາກເຮົາເຊື່ອແລະໄວ້ວາງໃຈຄືພວກແມ່ຍິງເຫລົ່ານີ້ບັນຫາໜັກກໍຈະຖືກກິ້ງອອກຄືກັນ.

໓. ກ້ອນຫີນທີ່ຖືກກິ້ງອອກນັ້ນບໍ່ແມ່ນເພື່ອໃຫ້ພຣະເຢຊູອອກມາ ແຕ່ແມ່ນຖືກກິ້ງອອກເພື່ອໃຫ້ພວກແມ່ຍິງເຂົ້າໄປ ພິສູດວ່າໃນອຸບໂມງນັ້ນບໍ່ມີພຣະສົບພຣະເຢຊູ ເພາະພຣະອົງຊົງຄືນແລ້ວ.

**<u>ຄັ້ງທີສອງພົບກັບສາວົກ</u> (ລູກາ 24:13–27).**

1. ພຣະທັມລູກາໄດ້ເນັ້ນໜັກໃສ່ເຣື່ອງພຣະເຢຊູຊົງປາກົດຕົວຕໍ່ສາວົກສອງຄົນກຳລັງເດີນທາງຍ່າງກັບຈາກເຢຣູຊາເລັມເພື່ອກັບໄປບ້ານເອມາອູດຫລັງຈາກໄປເບິ່ງເຂົາຄຶງພຣະເຢຊູທີ່ໄມ້ກາງແຂນ, ແລະສາວົກທັງສອງບໍ່ແມ່ນສາວົກຢູ່ໃນພວກສາວົກ 12 ຄົນ, ສຳລັບສອງຄົນແມ່ນເດີນທາງຍ່າງປະມານ 7-15 ໄມ.

2. ສາວົກທັງສອງເດີນທາງ ແລະສົນທະນາ (ລົມກັນ) ກັນເຣື່ອງທີ່ເກີດຂຶ້ນກັບພຣະເຢຊູ ແລ້ວພຣະອົງກໍຊົງເດີນທາງຮ່ວມກັບເຂົານັ້ນເປັນບົດຮຽນສຳລັບຄຣິສຕຽນທຸກຄົນວ່າທຸກຄັ້ງທີ່ຄຣິສຕຽນພົບກັນຈະຕ້ອງລົມກັນເຣື່ອງພຣະເຢຊູ.

3. ພຣະເຢຊູຊົງຖາມເຂົາວ່າລົມກັນເຣື່ອງຫຍັງ? ພວກເຂົາກໍເຮັດໜ້າໂສກເສົ້າ ອາດເປັນເພາະເຂົາຈື່ຈຳທຸກຢ່າງທີ່ເກີດຂຶ້ນກັບພຣະເຢຊູ ຫລືສົງສານຜູ້ຖາມ ເພາະບໍ່ຮູ້ເຣື່ອງຫຍັງ (ເຂົາຄິດ).

**<u>ຊົມຊື່ນຍິນດີເມື່ອຮູ້ເຣື່ອງ</u> (ລູກາ 24: 28–35).**

1. ເຂົາຕ້ອນຮັບພຣະເຢຊູດ້ວຍການເຊີນໃຫ້ພັກເຊົາ ແລະມີພາເຂົ້າສຳລັບພຣະອົງນັ້ນຍັງເປັນບົດຮຽນວ່າ ຄຣິສຕຽນຈະຕ້ອງມີຈິດໃຈຕ້ອນຮັບແຂກ.

2. ພຣະເຢຊູຊົງເປີດເຜີຍໃຫ້ເຂົາຮູ້ວ່າພຣະອົງຊົງແມ່ນພຣະເຢຊູຜູ້ເຂົາຄຶງໄວ້ທີ່ໄມ້ກາງແຂນໃນແລງວັນສຸກນັ້ນ ບັດນີ້ພຣະອົງຊົງຄືນມາແລ້ວ ໂດຍການຫັກເຂົ້າຈີ່.

3. ເມື່ອສາວົກທັງສອງຮູ້ຄັກແນ່ວ່າແມ່ນພຣະເຢຊູແລ້ວ ເຂົາກໍບໍ່ໄດ້ຢຸດພັກຜ່ອນຫລືຖ້າໃຫ້ຮຸ່ງເຊົ້າກ່ອນ ເຂົາພາກັນຍ່າງກັບໄປເຢຣູຊາເລັມໃນຄືນນັ້ນ ເພື່ອບອກເຣື່ອງນີ້ແກ່ພວກສາວົກ 11 ຄົນ.

*ທວ*